# ການແນະນຳຄູ່ມື

ສຳລັບ ການອຳນວຍຄວາມສະດວກພາຍໃນ ແລະ
ກິດລະບຽບການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຂອງສາກົນ.

ສະຫະພັນກາແດງ
ແລະ ຊີກວົງເດືອນແດງສາກົນ

## ວາລະຂອງສະຫະພັນສາກົນໃນທົ່ວໂລກ (2006-2010)

ຈຸດສຸມລວມຂອງສະຫະພັນໃນສອງປີຂ້າງໜ້າແມ່ນແນໃສ່ບັນລຸເປົ້າໝາຍ ແລະ ບູລິມະສິດດັ່ງຕໍ່ໄປນີ້:

## ເປົ້າໝາຍຂອງພວກເຮົາ

**ເປົ້າໝາຍທີ 1:** ຫຼຸດຜ່ອນຈຳນວນຜູ້ເສຍຊີວິດ, ຜູ້ທີ່ໄດ້ຮັບບາດເຈັບ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດຕ່າງໆ.

**ເປົ້າໝາຍທີ 2:** ຫຼຸດຜ່ອນຈຳນວນຜູ້ເສຍຊີວິດ, ເຈັບປ່ວຍ ແລະ ຜົນກະທົບຈາກໄພພິບັດ ແລະ ເຫດສຸກເສີນດ້ານສາທາລະນະສຸກ.

**ເປົ້າໝາຍທີ 3:** ເພີ່ມທະວີຂີດຄວາມສາມາດຂອງຊຸມຊົນ, ສັງຄົມພົນລະເຮືອນ ແລະ ອົງການກາແດງ ແລະ ຊີກວົງເດືອນແດງ ເພື່ອແກ້ໄຂເຫດການສຸກເສີນທີ່ອາດຈະສ້າງຄວາມເສຍຫາຍຫຼາຍທີ່ສຸດ.

**ເປົ້າໝາຍທີ 4:** ສົ່ງເສີມໃຫ້ມີຄວາມເຄົາລົບນັບຖືຕໍ່ຄວາມຫຼາກຫຼາຍ ແລະ ກຽດສັກສີຂອງມະນຸດແລະຫຼຸດຜ່ອນຄວາມກຽດຊັງ, ການຈຳແນກ ແລະ ການແບ່ງແຍກທາງດ້ານສັງຄົມ.

## ບຸລິມະສິດຂອງພວກເຮົາ

ປັບປຸງຂີດຄວາມສາມາດຂອງທ້ອງຖິ່ນ, ຂົງເຂດ ແລະ ສາກົນໃນການຮັບມືກັບເຫດການໄພພິບັດ ແລະ ເຫດການສຸກເສີນດ້ານສາທາລະນະສຸກ.

ເພີ່ມທະວີການຈັດຕັ້ງປະຕິບັດຮ່ວມກັບຊຸມຊົນ ທີ່ມີຄວາມສ່ຽງໃນການສົ່ງເສີມສຸຂະພາບ, ການປ້ອງກັນການຕິດເຊື້ອພະຍາດ ແລະ ການຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນຈາກໄພພິບັດ.

ເພີ່ມການວາງແຜນງານ ແລະ ການໂຄສະນາ ກ່ຽວກັບໂລກເອດໃຫ້ຫຼາຍຂຶ້ນກວ່າເກົ່າ.

ສ້າງວຽກງານໂຄສະນາບູລິມະສິດບັນຫາ ກ່ຽວກັບ ມະນຸດຊະທຳຄືນໃໝ່ອີກເທື່ອໜຶ່ງ ໂດຍສະເພາະແມ່ນການຕໍ່ສູ້ກັບຄວາມກຽດຊັງ, ການປະນາມ ແລະ ການແບ່ງແຍກ ແລະ ສົ່ງເສີມການຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດ.

## ກ່ຽວກັບແຜນງານ IDRL

ແຜນງານກົດໝາຍ ກ່ຽວກັບ ການຮັບມືກັບໄພພິບັດສາກົນ, ກົດລະບຽບ ແລະ ຫຼັກການຂອງສະຫະພັນກາແດງ ແລະ ຊີກວົງເດືອນແດງ ມຸ້ງໝັ້ນທີ່ຈະຫຼຸດຜ່ອນຄວາມສ່ຽງຂອງມະນຸດ ດ້ວຍການສົ່ງເສີມການກຽມພ້ອມດ້ານກົດໝາຍ ໃນເຫດໄພພິບັດ ໂດຍຜ່ານການໂຄສະນາ, ການຊ່ວຍເຫຼືອດ້ານວິຊາການ, ການຝຶກອົບຮົມ ແລະ ການຄົ້ນຄວ້າ.

*ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ,*
*ເຈນີວາ, 2008.*

*ເອກະສານທີ່ອັດສຳເນົາສ່ວນໜຶ່ງ ຫຼື ທັງໝົດຂອງຄູ່ມືສະບັບນີ້ອາດນຳໃຊ້ເຂົ້າໃນຈຸດປະສົງທີ່ບໍ່ຫວັງຜົນທາງດ້ານການຄ້າໄດ້ ແຕ່ຈະຕ້ອງໄດ້ອີງອ້າງໃສ່ແຫຼ່ງຂໍ້ມູນເສຍກ່ອນ. ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນນີ້ ຈະຂໍຂອບໃຈຖ້າຫາກວ່າທ່ານໄດ້ແຈ້ງເຈດຈຳນົງການນຳໃຊ້ເອກະສານນີ້. ຖ້າຫາກວ່າມີຈຸດປະສົງຢາກຜະລິດອອກມາ ເພື່ອຈົດປະສົງທາງດ້ານການຄ້າແລ້ວ, ທ່ານຄວນຍື່ນຄຳຮ້ອງສະເໜີຫາທີ່ຢູ່ນີ້ໂດຍກົງ: idrl@ifrc.org.*

*ຮູບໜ້າປົກ: ທ່ານນາງ ວີນາ ອໍເກິດສ໌ຕີນາ(Vina Agustina) / ສະຫະພັນສາກົນ*

ປີ 2008

ສະຫະພັນອົງການກາແດງສາກົນ ແລະ ຊີກວົງເດືອນສາກົນ

ຕູ້ ປ.ນ. 372
CH-1211 ເຈນີວາ 19
ປະເທດສະວິດເຊີແລນ
ໂທລະສັບ: +41 22 730 4222
ໂທລະສານ: +41 22 733 0395
ອີເມວ: idrl@ifrc.org
ທີ່ຢູ່ທາງອິນເຕີເນັດ: http://www.ifrc.org/idrl

## ຄຳນຳ

ເມື່ອໃດທີ່ໄດ້ຍິນສຽງຮຽກຮ້ອງຫາຄວາມຊ່ວຍເຫຼືອພາຍຫຼັງເກີດມີເຫດໄພພິບັດທີ່ຫຍິ່ງໃຫຍ່ນັ້ນ, ຄວາມສົນໃຈຂອງຊາວໂລກແນໄປໃສ່ຄວາມຕ້ອງການທາງດ້ານມະນຸດຊະທຳຂອງບັນດາຜູ້ທີ່ໄດ້ຮັບຜົນກະທົບ ແລະ ແນໃສ່ຄວາມພະຍາຍາມເພື່ອຈະຕອບສະໜອງຄວາມຊ່ວຍເຫຼືອທາງດ້ານສະບຽງອາຫານ, ຢາປົວພະຍາດ ແລະ ສິ່ງຂອງທີ່ຈຳເປັນອື່ນໆໃຫ້ສິ່ງເຖິງມືຂອງຜູ້ປະສົບໄພໃຫ້ໄວທີ່ສຸດເທົ່າທີ່ຈະໄວໄດ້. ບັນຫາທາງດ້ານກົດລະບຽບການໃນການດຳເນີນການບັນເທົາທຸກນີ້ແມ່ນຢູ່ບໍ່ຄ່ອຍໄດ້ຮັບຄວາມສົນໃຈຈາກຄົນສ່ວນຫຼາຍ ເຖິງແມ່ນວ່າມັນເປັນປັດໃຈທີ່ສຳຄັນທີ່ຈະເຮັດໃຫ້ວຽກງານການບັນເທົາທຸກບັນລຸຜົນສຳເລັດກໍ່ຕາມ.

ລັດຖະບານສາມາດ ແລະ ຄວນກຽມພ້ອມໃຫ້ດີກວ່ານີ້ເພື່ອທີ່ຈະແກ້ໄຂບັນຫາດ້ານກົດລະບຽບເພື່ອຮັບເອົາການຊ່ວຍເຫຼືອຈາກສາກົນ. ໃນເດືອນພະຈິກ ປີ 2007, ກອງປະຊຸມສາກົນຂອງສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນຄັ້ງທີ 30 ໄດ້ຊ່ວຍແກ້ໄຂບັນຫານີ້ ດ້ວຍການນຳໃຊ້ຄູ່ມື ສຳລັບ ການອຳນວຍຄວາມສະດວກພາຍໃນ ແລະ ກົດລະບຽບກ່ຽວກັບການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຢ່າງເອກະພາບກັນ.

ຖ້າຫາກຈັດຕັ້ງປະຕິບັດຢ່າງເຕັມທີ່ແລ້ວ, ຄູ່ມືສະລັບນີ້ສາມາດປັບປຸງປະສິດທິພາບ ແລະ ຄຸນນະພາບຂອງການດຳເນີນການບັນເທົາທຸກ ແລະ ຊ່ວຍອະທິບາຍພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງແຕ່ລະພາກສ່ວນທີ່ກ່ຽວຂ້ອງໄດ້ຊັດເຈນກວ່າເກົ່າ. ໂດຍສອດຄ້ອງກັບຄຳໝັ້ນສັນຍາຂອງບັນດາຜູ້ກ່ຽວຂ້ອງທີ່ໄດ້ໃຫ້ໄວ້ໃນກອງປະຊຸມລະດັບສາກົນ ດັ່ງກ່າວ, ບັດນີ້ມັນຂຶ້ນກັບບັນດາລັດຖະບານຕ່າງໆເອງ ວ່າຈະນຳໃຊ້ຄູ່ມືສະບັບນີ້ເຂົ້າໃນການກວດສອບ ແລະ ເຮັດໃຫ້ລະບົບກົດລະບຽບໃຫ້ມີຄວາມເຂັ້ມແຂງກວ່າເກົ່າ ກ່ອນທີ່ຈະເກີດເຫດການໄພພິບັດຄັ້ງຕໍ່ໄປໄດ້ແນວໃດ. ດ້ວຍການເຮັດວຽກຮ່ວມກັບຄູ່ຮ່ວມງານດ້ານມະນຸດສະທຳອື່ນໆ, ສະຫະພັນສາກົນ ແລະ ສະມາຊິກສະຫະພັນກາແດງ ແລະ ຊີກວົງເດືອນແດງ ພ້ອມທີ່ຈະໃຫ້ການຊ່ວຍເຫຼືອລັດຖະບານໃນການປັບປຸງຢ່າງເຕັມທີ່.

ທ່ານ ມາກກູ ນິສ໌ກາລາ( Markku Niskala)
ເລຂາທິການໃຫຍ່

**ສາລະບານ**


| | |
|---|---|
| ພາກສະເໜີ | 3 |
| 1. ຄູ່ມືແມ່ນຫຍັງ? | 4 |
| 2. ຄູ່ມືນີ້ມາຈາກໃສ? | 4 |
| 3. ເປັນຫຍັງຄູ່ມືນີ້ຈຶ່ງມີຄວາມສຳຄັນ? | 4 |
| 4. ເນື້ອໃນໃຈຄວາມຫຼັກຂອງຄູ່ມືນີ້ມີຫຍັງແດ່? | 5 |
| 5. ຈະນຳໃຊ້ຄູ່ມືນີ້ແນວໃດ? | 6 |
| 6. ເຮົາສາມາດຊອກຮຽນຮູ້ໄດ້ຕື່ມຈາກໃສ? | 7 |
| **ຄູ່ມືສຳລັບການອຳນວຍຄວາມສະດວກພາຍໃນ ແລະ ກົດລະບຽບການບັນເທົາທຸກ ແລະການຊ່ວຍເຫຼືອ ຟື້ນຟູ ໃນເບື້ອງຕົ້ນຂອງສາກົນ** | 8 |
| ພາກທີ 1: ໜ້າທີ່ຮັບຜິດຊອບຕົ້ນຕໍ | 12 |
| ພາກທີ 2: ການເຕືອນໄພ ແລະ ກະກຽມລ່ວງໜ້າ | 13 |
| ພາກທີ 3: ການລິເລີ່ມ ແລະ ການສິ້ນສຸດຂອງການຊ່ວຍເຫຼືອບັນເທົາທຸກ ແລະ ຟື້ນຟູໃນໄລຍະເລີ່ມຕົ້ນສາກົນ. | 14 |
| ພາກທີ 4: ສິດທິທີ່ຈະໄດ້ຮັບສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍ | 15 |
| ພາກທີ 5: ສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍ ສຳລັບການເຂົ້າ ແລະ ປະຕິບັດງານ. | 16 |
| **ມະຕິທີ 4 ຂອງກອງປະຊຸມສາກົນຂອງສະມາຄົມກາແດງ ແລະ ຊີກວົງເດືອນແດງຄັ້ງທີ 30 (ເດືອນພະຈິກ, 2007)** | 20 |

# ພາກສະເໜີ

ໃນຫຼາຍທົດສະວັດທີ່ຜ່ານມາ, ຫຼາຍໆປະເທດໄດ້ມີການປັບປຸງຄວາມສາມາດໃນການແກ້ໄຂ ແລະ ຮັບມືກັບຜົນກະ ທົບທີ່ເກີດຂຶ້ນຈາກໄພພິບັດ. ເຖິງຢ່າງໃດກໍ່ຕາມ, ບາງເຫດການທາງໄພພິບັດທາງທຳມະຊາດມີຄວາມຮຸນແຮງເກີນໄປ ແລະ ເຮັດໃຫ້ບາງປະເທດບໍ່ສາມາດຈະຮັບມືໄດ້. ເຫດການດັ່ງກ່າວຈະສືບຕໍ່ໄປໃນອານາຄົນອັນໃກ້ນີ້ ເພາະເຫດການທາງດ້ານດິນຟ້າອາກາດແມ່ນເພີ່ມຄວາມຮຸນແຮງຂຶ້ນເລື້ອຍໆ ເນື່ອງຈາກບັນຫາສະພາບການປ່ຽນແປງຂອງເຮືອນແກ້ວ ແລະ ຈຳນວນປະຊາກອນທີ່ດຳລົງຊີວິດທີ່ບໍ່ລະວັງ ໄດ້ເພີ່ມຂື້ນ. ເມື່ອມີເຫດການໄພພິບັດເກີດຂື້ນນັ້ນ, ມັນຈຶ່ງຈຳເປັນ“ທີ່ປະເທດຕ່າງໆ ຕ້ອງໄດ້ຮ່ວມມືກັນ ເພື່ອຕອບສະໜອງຄວາມຕ້ອງການດ້ານມະນຸດຊະທຳໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບ.

ເຫດການທາງໄພພິບັດທີ່ເກີດຂື້ນມໍ່ໆ ນີ້ໄດ້ສະແດງໃຫ້ເຫັນວ່າ ບໍ່ມີລັດໃດທີ່ຄິດວ່າຕົນເອງບໍ່ຕ້ອງ ການຄວາມຊ່ວຍເຫຼືອ ຈາກສາກົນໃນເວລາທີ່ປະສົບກັບໄພພິບັດ. ດັ່ງທີ່ ທ່ານເຮີລິເຄນ ແຄັດທຣີນາ (Hurrican Katrina) ໄດ້ສະແດງໄວ້ໃນປີ 2005 ວ່າ ເຖິງແມ່ນວ່າຈະເປັນປະເທດທີ່ຮັ່ງມີທີ່ສຸດກໍ່ຕາມ, ບາງຄັ້ງປະເທດເລົ່ານີ້ກໍ່ຍັງ ຕ້ອງການຄວາມຊ່ວຍເຫຼືອໃນການຮ່ວມມືທັງຈາກຕ່າງປະເທດເຊັ່ນກັນ.

ເຖິງຢ່າງໃດກໍ່ຕາມ ມີພຽງລັດຖະບານຈຳນວນໜ້ອຍດຽວເທົ່ານັ້ນ ທີ່ມີຄວາມກຽມພ້ອມພໍທີ່ຈະຮັບມືກັບໄພພິບັດທີ່ອາດຈະເກີດຂື້ນ ແລະ ປະເທດທີ່ກ່າວມານັ້ນອາດຈະຕ້ອງການຄວາມຊ່ວຍເຫຼືອ ຈາກສາກົນພຽງແຕ່ມື້ດຽວເທົ່ານັ້ນ. ໂດຍປົກກະຕິແລ້ວ, ຜົນທີ່ອອກມາກໍ່ຄືວິທີການທີ່ບໍ່ດີເທົ່າທີ່ຄວນ ໃນເວລາທີ່ຄວາມຕ້ອງການເພີ່ມຂຶ້ນ. ໃນບາງພື້ນທີ່, ການເຄັ່ງຄັດກັບກົດລະບຽບເກີນໄປກໍ່ນຳໄປສູ່ບັນຫາການໃຊ້ອຳນາດເກີນຂອບເຂດໂດຍບໍ່ຈຳເປັນ ເຊິ່ງຈະເຮັດໃຫ້ການເຂົ້າໄປ ແລະ ການແຈກຈ່າຍເຄື່ອງບັນເທົາທຸກເກີດມີຄວາມຊັກຊ້າ ເຊິ່ງໃນທາງກົງກັນຂ້າມການທີ່ບໍ່ເຄັ່ງຂັດກັບກົດລະບຽບກໍ່ເຮັດໃຫ້ ການຊ່ວຍເຫຼືອມີຄຸນນະພາບທີ່ຕໍ່າ ແລະ ບໍ່ມີການປະສານງານ. ບັນຫາເລົ່ານີ້ຖືກສະສົມດ້ວຍການ ເພີ່ມຂຶ້ນຂອງຈຳນວນ ແລະ ຄວາມຫຼາກຫຼາຍຂອງ ອົງການຈັດຕັ້ງສາກົນທີ່ຊອກໃຫ້ການຊ່ວຍເຫຼືອໃນການຮັບມືກັບໄພພິບັດຂະໜາດໃຫຍ່.

ລັດຖະບານ ທີ່ບໍ່ມີຄວາມກຽມພ້ອມທີ່ດີມັກຈະເຈັບຫົວກັບວຽກງານບໍລິຫານ ແລະ ການເມືອງ ໃນທາງກົງກັນຂ້າມນັ້ນຜູ້ໃຫ້ການຊ່ວຍເຫຼືອ ກໍ່ຈະເກີດມີຄວາມກັງວົນທີ່ເກີດຂື້ນຈາກຄວາມລ່າຊ້າ ແລະ ຕ້ອງໄດ້ເສຍຄ່າໃຊ້ຈ່າຍສູງເກີນຄວາມຈຳເປັນ. ເຖິງຢ່າງໃດກໍ່ຕາມ, ຜູ້ປະສົບເຄາະຮ້າຍ ກໍ່ຄືບັນດາຄອບຄົວທີ່ມີຊີວິດປີ້ນຈາກໜ້າມືເປັນຫຼັງມືຍ້ອນໄພພິບັດທາງທຳມະຊາດ ແລະ ເປັນຄົນທີ່ຕ້ອງການຄວາມຊ່ວຍເຫຼືອທີ່ຮີບດ່ວນ.

ເພື່ອແກ້ໄຂບັນຫາທີ່ກ່າວມານີ້, ສະຫະພັນກາແດງສາກົນ ແລະ ຊີກວົງເດືອນແດງກົນໄດ້ປຶກສາຫາລືກັບບັນດາລັດຖະບານ ແລະ ຊ່ຽວຊານບັນເທົາທຸກ ເພື່ອສ້າງຄູ່ມືສຳລັບການອຳນວຍຄວາມສະດວກພາຍໃນ ແລະ ກົດລະບຽບການຊ່ວຍເຫຼືອບັນເທົາທຸກ ແລະ ຟື້ນຟູໃນໄລຍະເລີ່ມຕົ້ນຂອງສາກົນ (“ຄູ່ມື”).

**1.ຄູ່ມືແມ່ນຫຍັງ?**

ຄູ່ມື ແມ່ນຊຸດຂໍ້ແນະນຳສຳລັບລັດຖະບານວ່າຈະກະກຽມແຜນ ແລະ ກົດໝາຍກ່ຽວກັບໄພພິບັດ ສຳລັບ ບັນຫາດ້ານລະບຽບການທີ່ມັກຈະເກີດຂຶ້ນໃນການດຳເນີນການບັນເທົາທຸກໄພພິບັດສາກົນ. ຄູ່ມືນີ້ແນະນຳລັດຖະບາ ຕ່າງໆ ວ່າຕົນເອງຄວນຈະຮັບເອົາການຊ່ວຍເຫຼືອ ດ້ານມະນຸດຊະທຳ ແລະ ສິ່ງອຳນວຍຄວາມສະດວກດ້ານກົດໝາຍທີ່ຜູ້ໃຫ້ການຊ່ວຍເຫຼືອຈຳເປັນຈະຕ້ອງໄດ້ເຮັດເພື່ອເຮັດວຽກຢ່າງປະສິດທິພາບ. ເຖິງແມ່ນວ່າການຮັບມືກັບບັນຫາທີ່ມັກເກີດຂຶ້ນທຸກມື້ນີ້, ແຕ່ຄູ່ມືນີ້ອີງໃສ່ເອກະສານທາງດ້ານນິຕິກຳ ແລະ ນະໂຍບາຍລະຫວ່າງປະເທດ.

**2.ຄູ່ມືນີ້ມາຈາກໃສ?**

ໃນປີ 2001, ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນໄດ້ເລີ່ມຕົ້ນດຳເນີນແຜນງານກົດໝາຍ, ກົດລະບຽບ ແລະ ຫຼັກການຮັບມືກັບໄພພິບັດລະຫວ່າງປະເທດ ເພື່ອຊອກຮູ້ວ່າ ໂຄງສ້າງກົດໝາຍສາມາດປັບປຸງການໃຫ້ການຊ່ວຍເຫຼືອບັນເທົາທຸກໃຫ້ດີໄດ້ແນວໃດ. ດ້ວຍການດຳເນີນແຜນງານທີ່ກ່າວມານີ້, ສະຫະສະພັນນີ້ໄດ້ເກັບກຳຂໍ້ມູນກ່ຽວກັບກົດໝາຍພາຍໃນ ແລະ ລະຫວ່າງປະເທດ, ໄດ້ສ້າງ ຫຼື ນຳໃຊ້ກໍລະນີສຶກສາຈຳນວນ 24 ກໍລະນີກວ່າໃນທົ່ວໂລກ ແລະ ໄດ້ປຶກສາຫາລືກັບຜູ້ທີ່ມີສ່ວນກ່ຽວຂ້ອງກ່ຽວກັບ ປະສົບການດ້ານບັນຫາກົດໝາຍໃນການດຳເນີນການຮັບມືກັບໄພພິບັດຂອງເຂົາເຈົ້າ.

ໃນປີ 2003, ກອງປະຊຸມສາກົນຂອງສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ (ເຕົ້າໂຮມເອົາລັດຕ່າງໆ ໄດ້ມາປະຊຸມກັນກ່ຽວກັບສົນທິສັນຍາເຈນນີວາ ແລະ ອົງປະກອບຂອງຂະບວນການເຄື່ອນໄຫວຂອງສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ) ໄດ້ໃຫ້ຄຳເຫັນຕໍ່ວຽກງານທີ່ກຳລັງສືບຕໍ່ ແລະ ຮຽກຮ້ອງໃຫ້ສະຫະພັນດັ່ງກ່າວເຮັດວຽກຮ່ວມກັບຄູ່ຮ່ວມງານອື່ນໆ ເພື່ອສ້າງ ນຳໃຊ້ຕົວຈິງໃນກົດຈະກຳການຮັບມືກັບໄພພິບັດສາກົນ.

ໃນລະຫວ່າງປີ 2006 ຫາ 2007, ສະຫະພັນ ແລະ ຄູ່ຮ່ວມງານຂອງຕົນໄດ້ຈັດກອງປະຊຸມປະຈຳຂົງເຂດຂັ້ນສູງຫຼາຍຄັ້ງ ເຊິ່ງເຮັດໃຫ້ເກີດມີການສ້າງຄູ່ມືນີ້. ມີລັດຖະບານຈຳນວນທັງໝົດ 140 ກວ່າລັດຖະບານ, 140 ກາແດງ ແລະ ຊີກວົງເດືອນແດງແຫ່ງຊາດ ແລະ 40 ອົງການຈັດຕັ້ງສາກົນ, ອົງການທີ່ບໍ່ຂຶ້ນກັບລັດຖະບານ ແລະ ເຄືອຂ່າຍອົງການທີ່ບໍ່ຂຶ້ນກັບລັດຖະບານນັ້ນໄດ້ເຂົ້າຮ່ວມໃນກອງປະຊຸມເລົ່ານີ້ ຫຼື ຖ້າບໍ່ແນວນັ້ນກໍ່ໄດ້ໃຫ້ຄຳຄິດເຫັນເຂົາໃນການຮ່າງຄູ່ມືນີ້.

ໃນເດືອນພະຈິກ 2007, ລັດຕ່າງໆ ແລະ ສະມາຊິກກາແດງ ແລະ ຊີກວົງເດືອນແດງໄດ້ຕົກລົງເຫັນດີກັນເປັນເອກະພາບເພື່ອນຳໃຊ້ຄູ່ມືນີ້ໃນກອງປະຊຸມສາກົນຂອງສະຫະພັນກາແດງ ແລະ ຊີກວົງເດືອນແດງ.

**3.ເປັນຫຍັງຄູ່ມືນີ້ຈຶ່ງມີ ຄວາມສຳຄັນ?**

ຄູ່ມືນຳ້ມີຄວາມຈຳເປັນ ເນື່ອງຈາກວ່າປະເທດສ່ວນໃຫຍ່ບໍ່ມີກົດໝາຍພິເສດໄວ້ເພື່ອອຳນວຍຄວາມສະດວກ ແລະ ຄວບຄຸມການບັນເທົາທຸກສາກົນ. ຜົນທີ່ໄດ້ຮັບກໍ່ຄືບັນຫາຕ່າງໆນາໆເຊິ່ງລວມທັງ:

## ກ. ລະບຽບການທີ່ບໍ່ຈຳເປັນ

- ຂໍ້ຫ້າມ ແລະ ຄວາມລ່າຊ້າໃນການແຈ້ງພາສີນຳເຂົ້າເຄື່ອງ ແລະ ອຸປະກອນບັນເທົາທຸກ;
- ການວາງພາສີ, ຄ່າທຳນຽມ ແລະ ຄ່າອາກອນອື່ນໆຕໍ່ເຄື່ອງ ແລະ ກິດຈະກຳບັນເທົາທຸກ;
- ຄວາມຫຍຸ້ງຍາກ ແລະ ຄວາມລ່າຊ້າໃນການຂໍ ແລະ ຕໍ່ອາຍຸວີຊາ ແລະ ໃບອະນຸຍາດເຮັດວຽກຂອງບຸກຄະລາກອນຊ່ວຍເຫຼືອດ້ານມະນຸດຊະທຳ;
- ຄວາມຫຍຸ້ງຍາກໃນການຂໍຂຶ້ນທະບຽນອົງການຈັດຕັ້ງຊ່ວຍເຫຼືອດ້ານມະນຸດຊະທຳຕ່າງປະເທດ ທີ່ເຮັດມີບັນຫາໃນການເປີດບັນຊີທະນາຄານ ແລະ ຈ້າງພະນັກງານທ້ອງຖິ່ນ.

## ຂ. ຄຸນນະພາບ ແລະ ການປະສານງານທີ່ບໍ່ດີ ຈາກຜູ້ໃຫ້ການຊ່ວຍເຫຼືອສາກົນ

- ການນຳເຂົ້າເຄື່ອງບັນເທົາທຸກທີ່ບໍ່ຈຳເປັນ ຫຼື ບໍ່ເໝາະສົມ;
- ບໍ່ໄດ້ປະສານງານກັບອຳນາດການປົກຄອງທ້ອງຖິ່ນ ແລະ ຜູ້ໃຫ້ການຊ່ວຍເຫຼືອບັນເທົາທຸກອື່ນໆ;
- ນຳໃຊ້ບຸກຄະລາກອນທີ່ບໍ່ຜ່ານການຝຶກອົບຮົມຢ່າງພຽງພໍ;
- ບໍ່ໄດ້ປຶກສາຫາລືກັບຜູ້ໄດ້ຮັບຜົນປະໂຫຍດ;
- ພຶດຕິກຳທີ່ຍອມຮັບບໍ່ໄດ້ທາງດ້ານວັດທະນະທຳ;
- ເຮັດໃຫ້ປ່ຽນແປງຄວາມເລື່ອມໃສໃນການຊ່ວຍເຫຼືອ.

ປະສົບການທີ່ຜ່ານມາໄດ້ຊີ້ໃຫ້ເຫັນວ່າໃນເວລາທີ່ເລີ່ມເກີດມີໄພພິບັດນັ້ນບໍ່ແມ່ນເວລາທີ່ບໍ່ເໝາະສົມທີ່ຈະສ້າງກົດລະບຽບ ແລະ ລະບົບໃໝ່ເພື່ອແກ້ໄຂບັນຫາເລົ່ານີ້. ຄູ່ມືນີ້ຖືກສ້າງຂຶ້ນເພື່ອຊ່ວຍບັນດາລັດຖະບານເພື່ອກະກຽມຕົນເອງຮັບມືກ່ອນໄພພິບັດຈະເກີດຂຶ້ນ.

**4. ເນື້ອໃນໃຈຄວາມຫຼັກ ຂອງ ຄູ່ມືນີ້ແມ່ນຫຍັງ?**

ກ. ຜູ້ໃຫ້ການຊ່ວຍເຫຼືອໄພພິບັດພາຍໃນມີບົດບາດພື້ນຖານ

ຄູ່ມືນີ້ຮັບຮູ້ວ່າມັນເປັນໜ້າທີ່ທຳອິດ ແລະ ສຳຄັນທີ່ສຸດຂອງລັດຖະບານຂອງລັດທີ່ໄດ້ຮັບຜົນກະທົບ ທີ່ຈະຕ້ອງໄດ້ຕອບສະໜອງ ຄວາມຕ້ອງການທາງດ້ານມະນຸດຊະທຳທີ່ເກີດຂຶ້ນຈາກໄພພິບັດ ພາຍໃນຂອບເຂດຊາຍແດນ. ສະຫະພັນກາແດງ ແລະ ຊີກວົງເດືອນແດງ ແລະ ຜູ້ໃຫ້ການຊ່ວຍເຫຼືອຈາກສັງຄົມພົນລະເຮືອນອື່ນໆໃນລັດທີ່ໄດ້ຮັບຜົນກະທົບນັ້ນມີບົດບາດທີ່ ສຳຄັນໃນການສະໜັບສະໜຸນ. ການຊ່ວຍເຫຼືອໄພພິບັດສາກົນຄວນຖືກອອກແບບ ແລະ ຈັດຕັ້ງປະຕິບັດ ເພື່ອຄຽງຄູ່ກັບຄວາມພະຍາຍາມຂອງຜູ້ໃຫ້ການຊ່ວຍເຫຼືອພາຍໃນແທນທີ່ຈະຂັບໄລ່ເຂົາເຈົ້າ.

**ຂ**. ໜ້າທີ່ຮັບຜິດຊອບຂອງຜູ້ໃຫ້ ການຊ່ວຍເຫຼືອບັນເທົາທຸກສາກົນ

ຄູ່ມືນີ້ຢັ້ງຢືນວ່າຜູ້ໃຫ້ການຊ່ວຍເຫຼືອສາກົນມີໜ້າທີ່ຮັບຜິດຊອບປະຕິບັດຕາມມາດຕະຖານມະນຸດຊະທຳຕ່ຳສຸດໃນການຊ່ວຍເຫຼືອໄພພິບັດ. ມາດຕະການເຫຼົ່ານີ້ປະກອບດ້ວຍຫຼັກການຂອງມະນຸດຊະທຳ, ຄວາມເປັນກາງ ແລະ ການບໍ່ຝັກຝ່າຍໃດກໍ່ຄືເຄື່ອງ, ບຸກຄະລາກອນ ແລະ ແຜນງານການບັນເທົາທຸກ ທີ່ລະບຸໄວ້ໃນກົດລະບຽບວິໄນຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ໃນການບັນເທົາທຸກໄພພິບັດ ແລະ ກົດບັດມະນຸດຊະທຳໃນທົ່ວໂລກ ແລະ ມາດຕະຖານຕ່ຳສຸດໃນການບັນເທົາທຸກໄພພິບັດ.

**ຄ**. ຜູ້ໃຫ້ການຊ່ວຍເຫຼືອສາກົນຕ້ອງການສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍ

ຄູ່ມືນີ້ລະບຸປະເພດຕ່າງໆຂອງສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍ ຫຼື ຄຳແນະນຳຕ່າງໆທີ່ລັດຖະບານຄວນຕອບສະໜອງໃຫ້ແກ່ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຈັດຕັ້ງມະນຸດຊະທຳ ເພື່ອທີ່ວ່າເຂົາເຈົ້າຈະສາມາດເຮັດໜ້າທີ່ຂອງຕົນໃນການຮັບມືກັບຄວາມຕ້ອງການທາງດ້ານມະນຸດຊະທຳໄດ້ຢ່າງມີປະສິດທິພາບ. ຕົວຢ່າງ, ເຂົາເຈົ້າຮຽກຮ້ອງຂໍ:

- ເລັ່ງອະນຸມັດອອກວີຊາ ແລະ ການແຈ້ງພາສີສຳລັບບຸກຄະລາກອນ, ເຄື່ອງ ແລະ ອຸປະກອນບັນເທົາທຸກ
- ການອຳນວຍຄວາມສະດວກໃນການຂົນສິ່ງບັນເທົາທຸກ
- ຍົກເວັ້ນອາກອນ, ພາສີ ແລະ ຄ່າທຳນຽມຕ່າງໆກ່ຽວກັບກິດຈະກຳບັນເທົາທຸກ
- ເຮັດໃຫ້ຂັ້ນຕອນສຳລັບອົງການມະນຸດຊະທຳໄດ້ຮັບການອະນຸຍາດທີ່ຖືກຕ້ອງຕາມກົດໝາຍພາຍໃນຊົ່ວຄາວ ເພື່ອດຳເນີນກິດຈະກຳຢ່າງຖືກກົດໝາຍພາຍໃນປະເທດ

ຄວາມແຕກຕ່າງໄດ້ເຮັດໃຫ້ເຫັນໄດ້ແຈ້ງລະຫວ່າງ 'ການບັນເທົາທຸກ' ແລະ 'ການຊ່ວຍເຫຼືອຟື້ນຢູໃນໄລຍະທຳອິດ' ໃນບາງຂໍ້ກຳນົດ ເຊິ່ງຄວາມເລັ່ງດ່ວນນັ້ນມັນສຳຄັນຕໍ່ການບັນເທົາທຸກກວ່າ ການຊ່ວຍເຫຼືອຟື້ນຟູໃນໄລຍະທຳອິດ. ຄູ່ມືນີ້ຍັງໄດ້ສະໜັບສະໜຸນລັດເພື່ອຫຼຸດຜ່ອນກຳແພງທາງດ້ານນິຕິກຳທີ່ມີຕໍ່ການບັນເທົາທຸກໄພພິບັດທີ່ເກີດຂື້ນພາຍໃນ ຫຼື ຜ່ານດິນແດນຂອງຕົນໄປຫາອີກປະເທດໜຶ່ງທີ່ໄດ້ຮັບຜົນກະທົບຈາກໄພພິບັດເພື່ອຫຼີກລ່ຽງຄວາມລ່າຊ້າ.

## ໑. ສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍບາງຢ່າງຄວນມີເງື່ອນໄຂ

ເພື່ອເຮັດໃຫ້ໜ້າທີ່ຮັບຜິດຊອບ ຂອງອົງການຊ່ວຍເຫຼືອດ້ານມະນຸດຊະທຳມີນ້ຳໜັກເພີ່ມ, ຄູ່ມືນີ້ໄດ້ສະໜັບສະໜຸນໃຫ້ລັດຖະບານ (ເຊິ່ງເປັນທີ່ຍອມຮັບໄດ້ໃນລະດັບໃດໜຶ່ງ ພາຍໃຕ້ກົດໝາຍລະຫວ່າງປະເທດ) ໃຫ້ສ້າງເງື່ອນໄຂຕ່າງໆ ໃນການຕອບສະໜອງສິ່ງອຳນວຍຄວາມສະດວກໃຫ້ແກ່ ອົງການຈັດຕັ້ງເລົ່ານີ້ກ່ຽວກັບພັນທະ ແລະ ການປະຕິບັດຕາມມາດຕະຖານຕ່ຳສຸດທີ່ໄດ້ກ່າວມາຂ້າງເທິງນັ້ນ.

ຄູ່ມືນີ້ແນະນຳວ່າ ສິ່ງນີ້ຄວນຖືກຈັດຕັ້ງປະຕິບັດໃນຫຼາຍໆດ້ານ. ຕົວຢ່າງ: ການປະຕິບັດຕາມຂັ້ນຕອນການຂຶ້ນທະບຽນທີ່ງ່າຍດາຍ ຈະດີທີ່ສຸດກໍ່ບໍ່ຄວນມີຫຼັງຈາກທີ່ຫາກໍເກີດມີເຫດການໄພພິບັດເທົ່ານັ້ນ ແຕ່ກໍ່ຄວນມີມາດຕະການກຽມພ້ອມລ່ວງໜ້າອີກດ້ວຍ. ລັດທີ່ອອກອະນຸຍາດຄວນຕິດຕາມຜົນງານຂອງອົງການຈັດຕັ້ງທີ່ໄດ້ລົງທະບຽນແລ້ວ ເພື່ອສືບຕໍ່ປະຕິບັດຕາມມາດຕະຖານຕ່າງໆ ທີ່ກຳນົດໄວ້.

ຄູ່ມືນີ້ຮັບຮູ້ວ່າ ລັດບາງລັດອາດປາດຖະໜາທີ່ຈະໃຫ້ສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍ ໃຫ້ແກ່ບໍລິສັດເອກະຊົນ ທີ່ໃຫ້ການບໍລິຈາກການຊ່ວຍເຫຼືອໃນເວລາທີ່ມີເຫດການໄພພິບັດເກີດຂຶ້ນ. ຖ້າລັດຖະບານເຮັດແນວນັ້ນ, ເຂົາເຈົ້າຄວນຖືກຈັດຢູ່ໃນມາດຕະຖານດຽວກັນກັບອົງການຈັດຕັ້ງມະນຸດຊະທຳ. ບໍ່ຂໍແນະນຳໃຫ້ມີການກຳນົດເງື່ອນໄຂທີ່ຄືກັນສຳລັບການຊ່ວຍເຫຼືອລັດຖະບານຕໍ່ລັດຖະບານ ເນື່ອງຈາກວ່າເຫດຜົນທາງດ້ານການທູດໃນການແກ້ໄຂບັນຫາຄຸນນະພາບ ຫຼື ການປະສານງານ.

**2.ຈະນຳໃຊ້ຄູ່ມືນີ້ແນວໃດ?**

ຄູ່ມືນີ້ສາມາດນຳໃຊ້ໄດ້ຫຼາຍຈຸດປະສົງເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ການກຽມພ້ອມສຳລັບການບັນເທົາທຸກໄພພິບັດສາກົນ

**ລັດຖະບານ:**

- ຜູ້ອອກກົດໝາຍອາດອີງໃສ່ຄູ່ມືເພື່ອຮ່າງບົດບັນຍັດກ່ຽວກັບການຮັບມືກັບໄພພິບັດ
- ກະຊວງກ່ຽວຂ້ອງອາດນຳໃຊ້ຄູ່ມືເພື່ອເປັນບ່ອນອີງສຳລັບສ້າງກົດລະບຽບ, ແຜນ ແລະ ຂັ້ນຕອນການຈັດຕັ້ງ ປະຕິບັດ
- ຜູ້ບໍລິຫານອາດອີງໃສ່ຄູ່ມືນີ້ໃນການສ້າງກົດລະບຽບ ທີ່ບັງຄັບໃຊ້ພາຍໃຕ້ອຳນາດສຸກເສີນໃນເວລາທີ່ລັດທີ່ເກີດມີໄພພິບັດໄດ້ປະກາດແຈ້ງການ
- ລັດອາດນຳໃຊ້ຄູ່ມືເພື່ອເປັນບ່ອນອີງເພື່ອສ້າງຂໍ້ຕົກລົງຮ່ວມມືສອງຝ່າຍ

**ອົງການມະນຸດຊະທຳ**

- ອົງການມະນຸດຊະທຳ ອາດອີງໃສ່ຄູ່ມືນີ້ ເພື່ອສ້າງສັນຍາຂໍ້ຕົກລົງ ແລະ ບັນທຶກຄວາມເຂົ້າໃຈກັບລັດຖະບານ
- ເຂົາເຈົ້າອາດນຳໃຊ້ຄູ່ມືນີ້ ເປັນເອກະສານອ້າງອີງເພື່ອເຈລະຈາສິດທິ ແລະ ພັນທະໃນເວລາທີ່ການປະຕິບັດຕ້ອງໄດ້ເລີ່ມຕົ້ນກ່ອນທີ່ຈະມີຂໍ້ຕົກນັ້ນໄວ້
- ເຂົາເຈົ້າອາດນຳໃຊ້ຄູ່ມືເປັນລາຍການກວດກາ ບັນຫາກົດໝາຍຕ່າງໆເພື່ອກະກຽມການດຳເນີນການບັນເທົາທຸກລ່ວງໜ້າ

**ອົງການຈັດຕັ້ງລະຫວ່າງລັດຖະບານຂັ້ນຂົງເຂດ**

- ອົງການຈັດຕັ້ງຂົງເຂດອາດອີງໃສ່ຄູ່ມື ເພື່ອເຮັດໃຫ້ສັນຍາຂໍ້ຕົກລົງ ແລະ ຂັ້ນຕອນການດຳເນີນການມາດຕະຖານໄດ້ທັນສະໄໝຂຶ້ນກວ່າເກົ່າ ເພື່ອອຳນວຍຄວາມສະດວກການບັນເທົາທຸກຂ້າມຊາຍແດນໃນບັນດາລັດສະມາຊິກ

**6.ເຮົາສາມາດຊອກຮຽນຮູ້ໄດ້ຕື່ມຈາກໃສ?**

ເອກະສານເພີ່ມເຕີມຕໍ່ໄປນີ້ມີໄວ້ໃນເວັບໄຊ້ຂອງສະຫະພັນໂດຍບໍ່ໄດ້ເສຍຄ່າທີ່: www.ifrc.org/iedl

### ກ. ການອະທິບາຍປະກອບ

ເນື່ອງຈາກວ່າເປັນສ່ວນໜຶ່ງຂອງຂະບວນການພັດທະນາ, ສະຫະພັນໄດ້ສ້າງການອະທິບາຍປະກອບສຳລັບຄູ່ມືນີ້. ການອະທິບາຍປະກອບ ເປັນເອກະສານອ້າງອີງ ສຳລັບ ເອກະສານນິຕິກຳ ແລະ ນະໂຍບາຍລະຫວ່າງປະເທດທີ່ອີງໃສ່ບາງຂໍ້ຂອງຄູ່ມືນີ້. ຄູ່ມືນີ້ປະກອບດ້ວຍເຄື່ອງມືສະເພາະຫຼາຍໆ ຢ່າງທີ່ອາດເປັນການຊຸກຍູ້ທີ່ສຳຄັນສຳລັບລັດຖະບານທີ່ຈະຮ່າງກົດໝາຍ ແລະ ນະໂຍບາຍໃໝ່ໆ. ນອກຈາກນີ້, ການອະທິບາຍປະກອບກໍ່ຍັງໃຫ້ຄຳອະທິບາຍກ່ຽວກັບການນຳໃຊ້ຄຳແນະນຳທີ່ນອນຢູ່ໃນປື້ມຄູ່ມື.

### ຂ. ກໍລະນີສຶກສາ

ໃນເດືອນພະຈິກ 2007, ສະຫະພັນໄດ້ຈັດພິມບົດຄົ້ນຄວ້າທີ່ມີຫົວຂໍ້ວ່າ 'ບັນຫາກົດໝາຍ ແລະ ນິຕິກຳໃນການຮັບມືກັບໄພພິບັດສາກົນ'. ການຄົ້ນຄວ້ານີ້ອະທິບາຍເຖິງໂຄງສ້າງນິຕິກຳລະຫວ່າງປະເທດທີ່ມີຢູ່ສຳລັບການຮັບມືກັບໄພພິບັດ ແລະ ໄດ້ກ່າວເຖິງບັນຫາບັນຫາທາງດ້ານນິຕິກຳຕ່າງໆ ດັ່ງທີ່ໄດ້ກຳນົດໄວ້ໂດຍການປຶກສາຫາລື ແລະ ການຄົ້ນຄວ້າຂອງສະຫະພັນ ເຊິ່ງລວມທັງກໍລະນີສຶກໃນປະເທດ ຫຼື ຂົງເຂດ. ກໍລະນີສຶກສາມີແຍກກັນໄວ້ຕ່າງຫາກ.

### ຄ. ຖານຂໍ້ມູນ IDRL

ເວັບໄຊ້ ຂອງສະຫະພັນໄດ້ສະແດງຖານຂໍ້ມູນ ທີ່ສາມາດຄົ້ນຫາຂໍ້ມູນກົດໝາຍພາຍໃນ ແລະ ລະຫວ່າງປະເທດທີ່ກ່ຽວກັບການບັນເທົາທຸກໄດ້ຈຳນວນ 600 ກວ່າເອກະສານ. ມັນເປັນການສັງລວມເອກະສານທີ່ໃຫຍ່ທີ່ສຸດໃນຂອບເຂດກົດໝາຍທີ່ເກີດຂຶ້ນໃໝ່.

### ງ. ບໍລິການຈົດໝາຍຂ່າວປະຈຳເດືອນ ແລະ ຂ່າວປະຈຳອາທິດ

ສຳລັບບຸກຄົນທີ່ມີຄວາມສົນໃຈໃນການພັດທະນາໃໝ່ນີ້, ສະຫະພັນໄດ້ສ້າງ E newsletter ປະຈຳເດືອນ ເຊິ່ງໄດ້ນຳສະເໜີການປ່ຽນແປງໃໝ່ໃນກົດໝາຍການຮັບມືກັບໄພພິບັດ ເຊັ່ນດຽວກັນກັບການບໍລິການຂ່າວທາງອິນເຕີເນັດປະຈຳອາທິດທີ່ສັງລວມເອົາຫົວຂໍ້ຂ່າວທີ່ກ່ຽວຂ້ອງ.

ຄູ່ມືສຳລັບ ການອຳນວຍຄວາມສະດວກ
ພາຍໃນ ແລະ ກິດລະບຽບການບັນເທົາທຸກ
ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຂອງ
ສາກົນ.

## ສາລະບານ


| | |
|---|---|
| **ພາກສະເໜີ** | 10 |
| 1. ຈຸດປະສົງ ແລະ ຂອບເຂດ | 10 |
| 2. ນິຍາມ | 11 |
| **ພາກທີ 1: ໜ້າທີ່ຮັບຜິດຊອບຕົ້ນຕໍ** | 12 |
| 3. ໜ້າທີ່ຮັບຜິດຊອບຂອງລັດທີ່ໄດ້ຮັບຜົນກະທົບ | 12 |
| 4. ໜ້າທີ່ຮັບຜິດຊອບຂອງຜູ້ໃຫ້ການຊ່ວຍເຫຼືອ | 12 |
| 5. ໜ້າທີ່ຮັບຜິດຊອບເພີ່ມເຕີມຂອງທຸກໆລັດ | 13 |
| 6. ໜ້າທີ່ຮັບຜິດຊອບໃນການນຳໃຊ້ທຶນທີ່ບໍ່ຖືກຕ້ອງຕາມຈຸດປະສົງ | 13 |
| **ພາກທີ 2: ການເຕືອນໄພ ແລະ ກະກຽມລ່ວງໜ້າ** | 13 |
| 7. ການເຕືອນໄພລ່ວງໜ້າ | 13 |
| 8. ໂຄງສ້າງທາງດ້ານນິຕິກຳ, ນະໂຍບາຍ ແລະ ສະຖາບັນ | 13 |
| 9. ການຊ່ວຍເຫຼືອໃນຂົງເຂດ ແລະ ສາກົນເພື່ອສ້າງຂີດຄວາມສາມາດພາຍໃນ | 14 |
| **ພາກທີ 3: ການລິເລີ່ມ ແລະ ການສິ້ນສຸດຂອງ**ການບັນເທົາທຸກ ແລະການຊ່ວຍເຫຼືອຟື້ນຟູໃນໄລຍະເລີ່ມຕົ້ນສາກົນ | 14 |
| 10. ການລິເລີ່ມ | 14 |
| 11. ການລິເລີ່ມຂອງການບັນເທົາຂອງທະຫານ | 14 |
| 12. ການສິ້ນສຸດການໃຫ້ການຊ່ວຍເຫຼືອ | 15 |
| **ພາກທີ 4: ສິດທິທີ່ຈະໄດ້ຮັບສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍ** | 15 |
| 13. ສິ່ງອຳນວຍຄວາມສະດວກສຳລັບລັດທີ່ໃຫ້ການຊ່ວຍເຫຼືອ | 15 |
| 14. ສິ່ງອຳນວຍຄວາມສະດວກສຳລັບອົງການຊ່ວຍເຫຼືອດ້ານມະນຸດສະທຳ | 15 |
| 15. ສິ່ງອຳນວຍຄວາມສະດວກສຳລັບຜູ້ໃຫ້ການຊ່ວຍເຫຼືອອື່ນໆ | 15 |
| **ພາກທີ 5: ເງື່ອນໄຂອຳນວຍຄວມສະດວກທາງດ້ານກົດໝາຍ ເພື່ອເຂົ້າໄປ ແລະ ດຳເນີນການຊ່ວຍເຫຼືອ** | 16 |
| 16. ບຸກຄະລາກອນບັນເທົາທຸກ | 16 |
| 17. ເຄື່ອ ແລະ ອຸປະກອນບັນເທົາທຸກ | 16 |
| 18. ເຄື່ອງ ແລະ ອຸປະກອນບັນເທົາທຸກພິເສດ | 17 |
| 19. ການຂົນສົ່ງເຄື່ອງບັນເທົາທຸກ | 18 |
| 20. ສະຖານະພາບທາງດ້ານກົດໝາຍພາຍໃນຊົ່ວຄາວ | 18 |
| 21. ການຊຳລະອາກອນ | 19 |
| 22. ການປ້ອງກັນຄວາມສະຫງົບ | 19 |
| 23. ການເຮັດວຽກນອກເວລາ | 19 |
| 24. ຄ່າໃຊ້ຈ່າຍ | 19 |

ຄູ່ມື ສໍາລັບ ການອໍານວຍຄວາມສະດວກພາຍໃນ ແລະ ກົດລະບຽບການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຂອງສາກົນ

# ພາກສະເໜີ

## 1. ຈຸດປະສົງ ແລະ ຂອບເຂດ

1. ຄູ່ມືສະບັບນີ້ບໍ່ໄດ້ເປັນພັນທະຜູກມັດ. ເຖິງແມ່ນວ່າຄູ່ມືນີ້ມີຄວາມມຸ້ງຫວັງວ່າບັນດາລັດຕ່າງໆ ຈະນໍາໃຊ້ຄູ່ມືນີ້ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກົດໝາຍ, ນະໂຍບາຍ ແລະ/ຫຼື ຂັ້ນຕອນຕ່າງໆ ທີ່ກ່ຽວຂ້ອງກັບການຮັບມືກັບໄພພິບັດສາກົນນັ້ນ ແຕ່ຄູ່ມືນີ້ບໍ່ໄດ້ສ້າງຜົນກະທົບໂດຍກົງຕໍ່ສິດທິ ຫຼື ພັນທະໃດໆພາຍໃຕ້ກົດໝາຍພາຍໃນຂອງປະເທດໃດໜຶ່ງ.
2. ຄູ່ມືເຫຼັ້ມນີ້ໄດ້ນໍາມາຈາກເອກະສານສັນຍາຂໍ້ລິງລະຫວ່າງປະເທດຕ່າງໆ ເຊິ່ງລວມທັງມະຕິຕົກລົງຂອງສະມັດຊາໃຫຍ່ສະຫະປະຊາຊາດເລກທີ 46/182 ໃນປີ 1991 ແລະ ເລກທີ 86/150 ໃນປີ 2002 ແລະ ນະໂຍບາຍ ຮີໂອໂກ່ເພື່ອປະຕິບັດ ໔໐໐໕.
3. ຈຸດປະສົງຂອງຄູ່ມືເຫຼັ້ມນີ້ ກໍ່ເພື່ອປະກອບສ່ວນເຂົ້າໃນການກຽມພ້ອມ ຂອງກົດໝາຍແຫ່ງຊາດ ໂດຍສະໜອງທິດທາງໃຫ້ແກ່ບັນດາລັດຕ່າງໆ ທີ່ມີຄວາມສົນໃຈໃນການປັບປຸງນິຕິກໍາ, ນະໂຍບາຍ ແລະ ຮ່າງກົດລະບຽບພາຍໃນຂອງຕົນເອງຕ່າງໆ ທີ່ກ່ຽວຂ້ອງກັບການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນສາກົນ. ເຖິງແມ່ນວ່າການຮັບຮອງເຫັນດີເອົາພາລະບົດບາດຫຼັກຂອງອໍານາດການປົກຄອງທ້ອງຖິ່ນ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງກໍ່ຕາມ ແຕ່ຄູ່ມືນີ້ກໍ່ຍັງໄດ້ແນະນໍາກ່ຽວກັບສິ່ງອໍານວຍຄວາມສະດວກທາງດ້ານນິຕິກໍາທີ່ຕ້ອງໄດ້ຕອບສະໜອງໃຫ້ແກ່ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດຊະທໍາທີ່ພ້ອມ ແລະ ສາມາດປະຕິບັດໄດ້ຕາມມາດຕະຖານຕໍ່າສຸດຂອງການປະສານງານ, ຄຸນນະພາບ ແລະ ການກວດສອບໄດ້. ຫວັງວ່າການນໍາໃຊ້ຄູ່ມືເຫຼັ້ມນີ້ຈະເຮັດໃຫ້ຄຸນນະພາບ ແລະ ປະສິດທິພາບຂອງການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນສາກົນນັ້ນດີຂຶ້ນກວ່າເກົ່າ ເພື່ອຮັບໃຊ້ບັນດາຊຸມຊົນທີ່ຖືກກະທົບຈາກໄພພິ ບັດໄດ້ດີກວ່າເກົ່າ.
4. ປື້ມຄູ່ມືເຫຼັ້ມນີ້ບໍ່ມີຈຸດປະສົງທີ່ຈະນໍາໃຊ້ພາຍໃຕ້ເງື່ອນໄຂການເຮັດສົງຄາມ ຫຼືກັບໄພພິບັດທີ່ເກີດຂຶ້ນໃນຊ່ວງໄລຍະທີ່ເຮັດສົງຄາມນັ້ນ ຫຼື ເພື່ອສະແດງໃຫ້ເຫັນເຖິງການປ່ຽນແປງກົດລະບຽບທີ່ຄຸ້ມຄອງການບັນເທົາທຸກ ໃນສະພາບເຫດການທີ່ກ່າວມານັ້ນ. ນອກຈາກນີ້, ຄູ່ມືເຫຼັ້ມນີ້ບໍ່ມີຈຸດປະສົງທີ່ຈະແນະນໍາ ໃຫ້ມີການປ່ຽນແປງໃດໆ ຫຼື ສິ່ງຜົນສະທ້ອນຕໍ່ຄວາມໝາຍ ຫຼື ການຈັດຕັ້ງປະຕິບັດຕາມລະບຽບກົດໝາຍ ຫຼື ຂໍ້ຕົກລົງລະຫວ່າງ ປະເທດດໃດໆ ທັງໝົດ ເຊິ່ງລວມທັງແຕ່ບໍ່ຈໍາກັດສະເພາະ:
    ກ. ກົດໝາຍວ່າດ້ວຍການຊ່ວຍເຫຼືອດ້ານມະນຸດຊະທໍາສາກົນ, ສິດທິມະນຸດ ແລະການລີ້ໄພ;
    ຂ. ຄຸນລັກສະນະທາງດ້ານນິຕິກໍາ ແລະ ສະຖານະພາບຂອງລັດ, ອົງການຈັດຕັ້ງລະຫວ່າງລັດຖະບານ, ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ
    ຄ. ກົດໝາຍລະຫວ່າງປະເທດທີ່ກ່ຽວຂ້ອງກັບສິດທິພິເສດ ແລະ ເອກະສິດ;
    ງ. ຂໍ້ບັງຄັບ ແລະ ກົດລະບຽບຂອງຂະບວນການເຄື່ອນໄຫວກາແດງ ແລະ ຊີກວົງເດືອນແດງສາກົນ ແລະ ການຕົກລົງທາງດ້ານນິຕິກໍາທີ່ມີຢູ່ລະຫວ່າງແຕ່ລະອົງປະກອບຂອງຂະບວນການເຄື່ອນໄຫວ ສະຫະພັນກາແດງ ແລະ ຊີກວົງເດືອນແດງກັບລັດ ຕ່າງໆ; ແລະ
    ຈ. ສັນຍາຂໍ້ຕົກລົງຕ່າງໆທີ່ມີຢູ່ລະຫວ່າງລັດກັບລັດ ຫຼື ລະຫວ່າງ ລັດກັບຜູ້ໃຫ້ການຊ່ວຍເຫຼືອ

## 2. ນິຍາມ

ເພື່ອນຳໃຊ້ໃນຄູ່ມືສະບັບນີ້:

1. **“ໄພພິບັດ”** ໝາຍເຖິງການແຕກແຍກທີ່ຮຸນແຮງຂອງສັງຄົມ ທີ່ມີຄວາມສ່ຽງຕໍ່ການນາບຊູ່ທີ່ກວ້າງຂວາງ ແລະ ໃຫຍ່ຫຼວງຕໍ່ຊີວິດ, ສຸຂະພາບ, ຊັບສິນ ຫຼື ສະພາບແວດລ້ອມຂອງຕົນບໍ່ວ່າຈະເກີດຂຶ້ນຈາກອຸບັດຕິເຫດ, ທຳມະຊາດ ຫຼື ນ້ຳມືຄົນ, ບໍ່ວ່າຈະເກີດຂຶ້ນທັນທີ ຫຼື ເປັນຜົນເນື່ອງມາຈາກຂະບວນການໄລຍະຍາວ ແຕ່ບໍ່ລວມທັງສົງຄາມການສູ້ຮົບ
2. **“ການບັນເທົາທຸກ”** ໝາຍເຖິງເຄື່ອງ ແລະ ການບໍລິການເພື່ອຕອບສະໜອງຄວາມຕ້ອງການສະເພາະໜ້າຂອງຊຸມຊົນທີ່ຖືກກະທົບຈາກໄພພິບັດ.
3. **“ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ”** ໝາຍເຖິງການມອບເຄື່ອງ ແລະ ການບໍລິການບັນເທົາທຸກທີ່ມີຈຸດປະສົງເພື່ອຟື້ນຟູ ຫຼື ປັບປຸງຊີວິດການເປັນຢູ່ກ່ອນເຫດການໄພພິບັດຂອລຊຸມຊົນທີ່ຖືກກະທົບຈາກໄພພິບັດໃຫ້ດີຂຶ້ນກວ່າເກົ່າ ເຊິ່ງລວມທັງແນວຄວາມຄິດລິເລີ່ມເພື່ອຟື້ນຟູສະພາບຈິດໃຈໃຫ້ດີຂຶ້ນ ແລະ ຫຼຸດຜ່ອນຄວາມສ່ຽງ, ທີ່ໄດ້ຕອບສະໜອງໃຫ້ໃນຊ່ວງໄລຍະເວລາທຳອິດທີ່ຖືກກຳນົດໄວ້ໂດຍລັດທີ່ໄດ້ຮັບຜົນກະທົບຫຼັງຈາກທີ່ໄດ້ຕອບສະໜອງຄວາມຕ້ອງການສະເພາະໜ້າ ຂອງຊຸມຊົນທີ່ຖືກກະທົບຈາກໄພພິບັດ.
4. **“ເຄື່ອງບັນເທົາທຸກ”** ໝາຍເຖິງສິ່ງຂອງທີ່ຈະມອບໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຈາກເຫດການໄພພິບັດເພື່ອຈຸດປະສົງເພື່ອການບັນເທົາທຸກ ຫຼື ຟື້ນຟູໃນໄລຍະທຳອິດຂອງເຂົາເຈົ້າ.
5. **“ການບໍລິການ”** ໝາຍເຖິງກິດຈະກຳ (ເຊັ່ນ: ການຊ່ວຍຊີວິດ ແລະ ການດູແລຮັກສາປິ່ນປົວ) ທີ່ປະຕິບັດໂດຍທີມງານບັນເທົາທຸກຜູ້ປະສົບເຄາະຮ້າຍທາງໄພພິບັດ ແລະ ຊ່ວຍເຫຼືອໃນການຟື້ນຟູ ທີ່ໄດ້ໃຫ້ການຊ່ວຍເຫຼືອແກ່ຊຸມຊົນທີ່ໄດ້ຮັບຜົນກະທົບຈາກໄພພິບັດ.
6. **“ອຸປະກອນບັນເທົາທຸກ”** ໝາຍເຖິງວັດຖຸສິ່ງຂອງ ທີ່ນອກເໜືອຈາກເຄື່ອງບັນເທົາທຸກທີ່ຈຳເປັນສຳລັບການບັນເທົາທຸກ ຫຼື ການຟື້ນຟູໃນເບື້ອງຕົ້ນ
7. **“ບຸກຄະລາກອນ”** ໝາຍເຖິງພະນັກງານ ແລະ ອາສາສະມັກທີ່ໃຫ້ການບັນເທົາທຸກ ຫຼື ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ.
8. **“ລັດທີ່ໄດ້ຮັບຜົນກະທົບ”** ໝາຍເຖິງລັດທີ່ມີປະຊາຊົນ ຫຼື ຊັບສິນທີ່ມີຢູ່ໃນດິນແດນຂອງຕົນຖືກກະທົບຈາກໄພພິບັດໃດໜຶ່ງ.
9. **“ລັດທີ່ໃຫ້ການຊ່ວຍເຫຼືອ”** ໝາຍເຖິງລັດທີ່ຕອບສະໜອງການບັນເທົາທຸກໄພພິບັດ ແລະ ໃຫ້ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ ບໍ່ວ່າຈະຜ່ານອົງປະກອບທາງດ້ານພົນລະເຮືອນ ຫຼື ທະຫານ.
10. **“ລັດຕົ້ນກຳເນີດ”** ໝາຍເຖິງລັດທີ່ການບັນເທົາທຸກໄພພິບັດ ແລະ ບຸກຄະລາກອນ, ສິນຄ້າ, ແລະ ອຸປະກອນເພື່ອຟື້ນຟູໃນເບື້ອງຕົ້ນ ເລີ່ມເດີນທາງໄປລັດທີ່ໄດ້ຮັບຜົນກະທົບ
11. **“ລັດທາງຜ່ານ”** ໝາຍເຖິງລັດທີ່ໄດ້ຮັບອະນຸຍາດໃຫ້ຜ່ານທາງໄປ ຫຼື ຈາກລັດທີ່ຮັບຜົນກະທົບທີ່ກ່ຽວຂ້ອງກັບການບັນເທົາທຸກ ຫຼື ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ.
12. **“ອົງການຊ່ວຍເຫຼືອດ້ານມະນຸດສະທຳ”** ໝາຍເຖິງອົງກອນຕ່າງປະເທດ, ປະຈຳຂົງເຂດ, ລະຫວ່າງລັດຖະບານ ຫຼື ລະຫວ່າງປະເທດ ທີ່ບໍ່ຫວັງຜົນກຳໄລທີ່ມີພາລະບົດບາດ ແລະ ກິດຈະກຳຕົ້ນຕໍແນໃສ່ການຊ່ວຍເຫຼືອດ້ານມະນຸດຊະທຳ, ການຟື້ນຟູ ຫຼື ການພັດທະນາ.
13. **“ອົງການຊ່ວຍເຫຼືອດ້ານມະນຸດຊະທຳທີ່ມີສິດ”** ໝາຍເຖິງອົງການທີ່ໃຫ້ການຊ່ວຍເຫຼືອດ້ານມະນຸດຊະທຳຈາກລັດຕົ້ນກຳເນີດ, ລັດທາງຜ່ານ ຫຼື ລັດທີ່ໄດ້ຮັບຜົນກະທົບທີ່ມຸ້ງໝັ້ນທີ່ຢາກຈະໄດ້ຮັບສິດທີ່ຈະໄດ້ສິ່ງອຳນວຍຄວາມສະດວກທາງດ້ານນິຕິກຳ ໂດຍອີງໃສ່ພາກທີ 5 ຕາມຄວາມເໝາະສົມ.

14. **"ຜູ້ໃຫ້ການຊ່ວຍເຫຼືອ"** ໝາຍເຖິງອົງການຈັດຕັ້ງມະນຸດສະທຳທີ່ໃຫ້ການຊ່ວຍເຫຼືອ, ລັດທີ່ໃຫ້ການຊ່ວຍເຫຼືອ, ຊາວຕ່າງປະເທດ, ບໍລິສັດເອກະຊົນຕ່າງປະເທດທີ່ໃຫ້ການບັນເທົາທຸກດ້ວຍການບໍລິຈາກ ຫຼື ອົງກອນຕ່າງປະເທດທີ່ຮັບມືກັບໄພພິບັດໃນເຂດແດນຂອງລັດທີ່ໄດ້ຮັບຜົນກະທົບ ຫຼື ທີ່ໄດ້ສົ່ງເງິນບໍລິຈາກ ຫຼື ແຮງງານໄປສົມທົບ.

# ພາກທີ 1: ໜ້າທີ່ຮັບຜິດຊອບຕົ້ນຕໍ

## 3. ໜ້າທີ່ຮັບຜິດຊອບຂອງລັດທີ່ໄດ້ຮັບຜົນກະທົບ

1. ລັດທີ່ໄດ້ຮັບຜົນກະທົບມີໜ້າທີ່ຮັບຜິດຊອບພື້ນຖານເພື່ອຮັບປະກັນການຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດ, ການໃຫ້ການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເຂດແດນຂອງຕົນ. ສະມາຄົມກາແດງ ແລະ ຊີກວົງເດືອນແດງຖືວ່າເປັນອົງກອນໃຫ້ການຊຸກຍູ້ອຳນາດການປົກຄອງຂອງລັດໃນຂົງເຂດ ມະນຸດສະທຳ ແລະ ສະມາ ຄົມພາຍໃນ ມີບົດບາດສຳຄັນໃນລະດັບພາຍໃນ.
2. ຖ້າຫາກລັດທີ່ໄດ້ຮັບຜົນກະທົບໃດໜຶ່ງໄດ້ກຳນົດວ່າສະພາບການໄພພິດບັດນັ້ນ ເກີນຄວາມສາມາດ ຂອງຕົນຈະແກ້ໄດ້ແລ້ວ, ລັດດັ່ງກ່າວຄວນຈະຊອກຫາການຊ່ວຍເຫຼືອຈາກຕ່າງປະເທດ ຫຼື ຈາກຂົງເຂດເພື່ອແກ້ໄຂຄວາມຕ້ອງການຂອງປະຊາຊົນທີ່ໄດ້ຮັບຜົນກະທົບ.
3. ລັດທີ່ໄດ້ຮັບຜົນກະທົບມີສິດທິອະທິປະໄຕໃນການປະສານງານ, ຄວບຄຸມ ແລະ ຕິດຕາມການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູ ທີ່ໄດ້ຮັບການຊ່ວຍເຫຼືອຈາກຜູ້ໃຫ້ການຊ່ວຍເຫຼືອ ໃນດິນແດນຂອງຕົນເຊິ່ງສອດຄ້ອງກັບກົດໝາຍລະຫວ່າງປະເທດ.

## 4. ໜ້າທີ່ຮັບຜິດຊອບຂອງຜູ້ໃຫ້ການຊ່ວຍເຫຼືອ

1. ຜູ້ໃຫ້ການຊ່ວຍເຫຼືອ ແລະ ບຸກຄະລາກອນຂອງຕົນຄວນເຄົາລົບກົດໝາຍຂອງລັດທີ່ໄດ້ຮັບຜົນກະ ທົບ ແລະ ກົດໝາຍລະຫວ່າງປະເທດທີ່ກ່ຽວຂ້ອງ, ຄວນປະສານງານກັບລັດຖະບານທ້ອງຖິ່ນ ແລະ ເຄົາລົບສັກສີຄວາມເປັນມະນຸດຂອງຜູ້ທີ່ຖືກກະທົບຕະຫຼອດເວລາ.
2. ຜູ້ໃຫ້ການຊ່ວຍເຫຼືອຄວນຮັບປະກັນວ່າການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນນັ້ນໄດ້ຖືກຕອບສະໜອງໄປຕາມຫຼັກການຕ່າງໆຂອງມະນຸດຊະທຳ, ຄວາມເປັນກາງ ແລະ ບໍ່ຝັກຝ່າຍໃດ ແລະ ໂດຍສະເພາະວ່າ:
   - ກ. ບູລິມະສິດໃນການຊ່ວຍເຫຼືອໄດ້ຖືກປະເມີນຜົນບົນພື້ນຖານຄວາມຕ້ອງການພຽງແຕ່ຢ່າງດຽວ ເທົ່ານັ້ນ
   - ຂ.ມັນຖືກຕອບສະໜອງໂດຍປາດສະຈາກການຈຳແນກທາງດ້ານສັນຊາດ, ເຊື້ອຊາດ, ຊົນເຜົ່າ, ຄວາມເຊື່ອຖືທາງສາດສະໜາ, ຊົນຊັ້ນ, ເພດ, ຄວາມພິການ, ອາຍຸ ຫຼື ການສະແດງຄວາມຄິດເຫັນທາງດ້ານການເມືອງ ຕໍ່ຜູ້ທີ່ໄດ້ຮັບຜົນກະທົບ;
   - ຄ. ມັນຖືກຕອບສະໜອງໂດຍປາດສະຈາກການສະແຫວງຫາຈຸດຢືນທາງດ້ານການເມືອງ ຫຼື ສາດສະໜາ, ເຂົ້າໄປແຊກແຊງກິດຈະການພາຍໃນຂອງລັດທີ່ໄດ້ຮັບຜົນກະທົບ, ຫຼື ຫວັງຜົນປະໂຫຍດ ທາງດ້ານການຄ້າຈາກການໃຫ້ການຊ່ວຍເຫຼືອຈາກການບໍລິຈາກ. ສະແຫວງຫາເພື່ອເຂົ້າໄປແຊກແຊງວຽກງານພາຍໃນຂອງລັດທີ່ຖືກກະທົບ ຫຼື ສະແຫວງຫາຜົນປະໂຫຍດທາງດ້ານການຄ້າຈາກການຊ່ວຍເຫຼືອບໍລິຈາກ.

ງ. ມັນບໍ່ຖືກນຳໃຊ້ເປັນເຄື່ອງມືໃນການເກັບກຳຂໍ້ມູນລັບທາງດ້ານການເມືອງ, ເສດຖະກິດ ຫຼື ການທະຫານ ທີ່ບໍ່ກ່ຽວກັບການບັນເທົາໄພພິບັດ ຫຼື ການຊ່ວຍເຫຼືອຟື້ນຟູໃນໄລຍະທຳອິດ.

3. ນອກຈາກນີ້ ເພື່ອໃຫ້ການປະຕິບັດຕົວຈິງເກີດຜົນສູງສຸດ ການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຄວນຈະ:

ກ. ສອດຄ້ອງກັບຄວາມຕ້ອງການພິເສດຂອງແມ່ຍິງ ແລະ ກຸ່ມສ່ຽງ ທີ່ອາດຈະປະກອບດ້ວຍເດັກ, ຄົນພັດຖິ່ນ, ຜູ້ເຖົ້າ, ຄົນທີ່ມີຄວາມພິການ, ຜູ້ຕິດເຊື້ອເອດ ແລະ ຜູ້ທີ່ເຈັບປ່ວຍອ່ອນເພຍ;

ຂ. ຕອບສະໜອງຄວາມຕ້ອງການຂອງຜູ້ທີ່ຖືກກະທົບໄດ້ຢ່າງພຽງພໍ ແລະ ສອດຄ້ອງກັບມາດຕະ ຖານຄຸນນະພາບສາກົນທີ່ກ່ຽວຂ້ອງ;

ຄ. ປະສານກັບຜູ້ທີ່ໃຫ້ການຊ່ວຍເຫຼືອ ແລະ ຜູ້ກ່ຽວຂ້ອງພາຍໃນປະເທດ

ງ. ໃຫ້ການຕອບສະໜອງ ແລະ ດຳເນີນການຊ່ວຍເຫຼືອໄປດ້ວຍຄວາມລະມັດລະວັງຕໍ່ຮີດຄອງປະເພນີວັດທະນະທຳ, ສັງຄົມ ແລະ ສາດສະໜາ;

ຈ. ດຳເນີນການຊ່ວຍເຫຼືອໂດຍໃຫ້ຜູ້ທີ່ໄດ້ຮັບຜົນກະທົບໄດ້ມີສ່ວນຮ່ວມ ເຊິ່ງລວມທັງແມ່ຍິງ, ຊາວ ໜຸ່ມ ແລະ ຜູ້ເຖົ້າຜູ້ແກ່ ໃນການອອກແບບ, ຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ;

ສ. ຕອບສະໜອງການຊ່ວຍເຫຼືອຈາກບຸກຄະລາກອນທີ່ມີຄວາມສາມາດ ແລະ ຜ່ານການຝຶກອົບຮົມຢ່າງພຽງພໍ;

ຊ. ແທດເໝາະກັບຂີດຄວາມສາມາດຂອງອົງການຈັດຕັ້ງຂອງຕົນ;

ຍ. ສືບຕໍ່ ແລະ ດຳເນີນໄປໃນທາງທີ່ເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ການຫຼຸດຜ່ອນຄວາມສ່ຽງ, ການບັນເທົາທຸກໄພພິບັດ ແລະ ການຟື້ນຟູໄພພິບັດທ້ອງຖິ່ນ ແລະ ຫຼຸດຜ່ອນຄວາມສ່ຽງທີ່ຈະເກີດມີໄພພິບັດອີກໃນອານາຄົດ.

ດ. ດຳເນີນໄປ ເພື່ອທີ່ຈະເຮັດໃຫ້ເກີດມີຜົນກະທົບໜ້ອຍທີ່ສຸດຕໍ່ຊຸມຊົນ, ເສດຖະກິດ, ຕະຫຼາດແຮງ ງານ, ຈຸດປະສົງດ້ານການພັດທະນາ ແລະ ສິ່ງແວດລ້ອມ; ແລະ

ຕ. ຕອບສະໜອງຄວາມຊ່ວຍເຫຼືອດ້ວຍຄວາມໂປ່ງໃສ, ແລກປ່ຽນຂໍ້ມູນທີ່ເໝາະສົມກ່ຽວກັບກິດຈະ ກຳ ແລະ ການໃຫ້ທຶນ.

## 5. ໜ້າທີ່ຮັບຜິດຊອບເພີ່ມເຕີມຂອງທຸກໆລັດ

1. ລັດທີ່ໃຫ້ທຶນຊ່ວຍເຫຼືອແກ່ຜູ້ໃຫ້ການຊ່ວຍເຫຼືອນັ້ນຄວນສະໜັບສະໜຸນໃຫ້ເຂົາເຈົ້າໄດ້ປະຕິບັດຕົວໃຫ້ສອດຄ້ອງກັບຂໍ້ກຳນົດໃນ ວັກທີ 4.
2. ລັດທັງໝົດຄວນຈະສະໜັບສະໜຸນສາທາລະນະຊົນທັງຫຼາຍທີ່ມີຄວາມສົນໃຈຢາກປະກອບສ່ວນໃນການບັນເທົາໄພພິບັດສາກົນ ຫຼື ການຟື້ນຟູໃນໄລຍະທຳອິດ ເພື່ອ ບໍລິຈາກເງິນຖ້າເປັນໄປໄດ້ ຫຼື ບໍລິຈາກເຄື່ອງບັນເທົາທຸກຢ່າງຮີບດ່ວນຕາມຄວາມຮ້ອງຂໍຂອງລັດທີ່ໄດ້ຮັບຜົນກະທົບ.

## 6. ໜ້າທີ່ຮັບຜິດຊອບໃນການນຳໃຊ້ທຶນທີ່ບໍ່ຖືກຕ້ອງຕາມຈຸດປະສົງ

1. ລັດ ແລະອົງການຊ່ວຍເຫຼືອດ້ານມະນຸດສະທຳຄວນຈະຮ່ວມມືກັນເພື່ອປ້ອງກັນການນຳໃຊ້ທຶນທີ່ຜິດກົດໝາຍ, ບໍ່ຖືກຕ້ອງ ຫຼື ການສໍ້ໂກງທີ່ກ່ຽວຂ້ອງກັບເຄື່ອງ, ອຸປະກອນ ຫຼື ຊັບພະຍາກອນການບັນເທົາໄພພິບັດ ຫຼື ການຟື້ນຟູໃນໄລຍະທຳອິດ ແລະ ດຳເນີນຂັ້ນຕອນໄປຕາມຄວາມເໝາະສົມ;

2. ລັດທີ່ໄດ້ຮັບຜົນກະທົບຄວນນຳໃຊ້ທຶນ ແລະ ເຄື່ອງບັນເທົາທຸກທີ່ໄດ້ຈາກການບໍລິຈາກ ແລະ ສິ່ງໃດສິ່ງໜຶ່ງທີ່ຕົນໄດ້ຮັບມາທີ່ກ່ຽວຂ້ອງກັບໄພພິບັດນັ້ນ ໄປໃນທາງທີ່ເໝາະສົມ ແລະ ສອດຄ້ອງກັບຈຸດປະສົງທີ່ວາງໄວ້.

# ພາກທີ 2: ການເຕືອນໄພ ແລະ ກະກຽມລ່ວງໜ້າ

## 7. ການເຕືອນໄພລ່ວງໜ້າ

1. ເພື່ອທີ່ຈະເຮັດໃຫ້ມີຜົນກະທົບຂ້າມຊາຍແດນໃຫ້ໜ້ອຍທີ່ສຸດ ແລະ ເຮັດໃຫ້ປະສິດທິພາບຂອງການຊ່ວຍເຫຼືອສາກົນທີ່ອາດຕ້ອງການນັ້ນໃຫ້ໄດ້ສູງສຸດ, ທຸກໆ ລັດຄວນມີຂັ້ນຕອນໄວ້ເພື່ອອຳນວຍຄວາມສະດວກການແລກປ່ຽນຂໍ້ມູນ ກ່ຽວກັບ ໄພພິບັດໃຫ້ໄດ້ໄວທີ່ສຸດກັບລັດອື່ນໆ ເຊິ່ງລວມທັງໄພອັນຕະລາຍ ທີ່ອາດຈະເຮັດໃຫ້ເກີດມີໄພພິບັດ ແລະ ອົງການຈັດຕັ້ງມະນຸດສະທຳທີ່ໃຫ້ການຊ່ວຍເຫຼືອ ຕາມຄວາມເໝາະສົມ ເຊິ່ງລວມທັງຜູ້ປະສານງານການບັນເທົາທຸກເຫດການສຸກເສີນຂອງອົງການສະຫະປະຊາຊາດ.

## 8. ໂຄງສ້າງດ້ານກົດໝາຍ, ນະໂຍບາຍ ແລະ ຂອງສະຖາບັນ

1. ໃນຖານະທີ່ເປັນອົງປະກອບທີ່ສຳຄັນຂອງແຜນງານການຫຼຸດຜ່ອນຄວາມສ່ຽງການເກີດໄພພິບັດ, ລັດຄວນຈະຕ້ອງໄດ້ນຳໃຊ້ກົດໝາຍ ແລະ ນະໂຍບາຍຕ່າງໆ ແລະ ການວາງແຜນສຳລັບປ້ອງກັນໄພພິບັດ, ມາດຕະຖານແກ້ໄຂ, ຄວາມພ້ອມ, ການບັນເທົາທຸກແລະການຟື້ນຟູ ໂດຍພິຈາລະນາບົດບາດເພີ່ມເຕີມຂອງສະພາກາແດງ ແລະ ຊີກວົງເດືອນແດງ, ລັດຄວນພິຈາລະນະກວາມເອົາສັງຄົມພົນລະເຮືອນ, ແລະ ໃຫ້ສິດອຳນາດແກ່ຊຸມຊົນໄດ້ປັບປຸງຄວາມປອດໄພ ແລະ ການຟື້ນຟູຈິດໃຈ. ລັດທີ່ໄດ້ຮັບການຊຸກຍູ້ຈາກອົງການຈັດຕັ້ງປະຈຳຂົງເຂດ ແລະ ອົງການຈັດຕັ້ງສາກົນກ່ຽວຂ້ອງຄວນມອບຊັບພະຍາກອນໃຫ້ພຽງພໍ ເພື່ອຮັບປະກັນປະສິດທິພາບຂອງໂຄງສ້າງນະໂຍບາຍເລົ່ານີ້.
2. ນອກຈາກນີ້, ໂຄງສ້າງນະໂຍບາຍເລົ່ານີ້ຍັງເນັ້ນໜັກເຖິງການລິເລີ່ມ, ການອຳນວຍຄວາມສະດວກ, ການຂ້າມຜ່ານ ແລະ ກົດລະບຽບ ຂອງການບັນເທົາທຸກໄພພິບັດສາກົນ ແລະ ການຊ່ວຍເຫຼືອຟື້ນຟູໃນໄລຍະທຳອິດໃຫ້ສອດຄ້ອງກັບຄູ່ມືນີ້. ໂຄງສ້າງນະໂຍບາຍ ຄວນເຮັດໃຫ້ມີການປະສານງານໃນການບັນເທົາທຸກໄພພິບັດ ແລະ ການຟື້ນຟູໃນເບື້ອງຕົ້ນທີ່ມີປະສິດທິພາບ ໂດຍພິຈາລະນາບົດບາດຂອງຜູ້ປະສານງານ ເຫດການສຸກເສີນ ຂອງອົງການສະຫະປະຊາຊາດ ໃຫ້ເປັນຈຸດໃຈກາງປະສານງານກັບລັດຕ່າງໆ ແລະ ຊ່ວຍອົງການຈັດຕັ້ງດ້ານມະນຸດສະທຳທີ່ກ່ຽວຂ້ອງ ກັບການຈັດຕັ້ງປະຕິບັດການບັນເທົາທຸກແບບສຸກເສີນ ຂອງອົງການສະຫະປະຊາຊາດ. ໂຄງສ້າງນະໂຍບາຍນີ້ຄວນມອບໝາຍໜ້າທີ່ໃຫ້ແກ່ອົງກອນຂອງລັດພາຍໃນປະເທດທີ່ມີໜ້າທີ່ ແລະ ອຳນາດໃນຂົງເຂດນີ້. ຄວນພິຈາລະນາສ້າງຕັ້ງຈຸດປະສານງານແຫ່ງຊາດຂຶ້ນເພື່ອເປັນຂົວຕໍ່ລະຫວ່າງອົງການຈັດຕັ້ງສາກົນ ແລະ ລັດຖະບານທ້ອງຖິ່ນໃນທຸກໆຂັ້ນ
3. ເມື່ອໃດທີ່ເປັນໄປໄດ້ ແລະ ເໝາະສົມນັ້ນ, ລັດຖະບານແຫ່ງຊາດຄວນຈະສະໜັບສະໜູນຜູ້ທີ່ສ່ວນກ່ຽວ ຂ້ອງອື່ນໆທີ່ມີອຳນາດທາງດ້ານກົດໝາຍ ຫຼື ນະໂຍບາຍທີ່ສອດຄ້ອງກັບການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໄລຍະທຳອິດເຊັ່ນ: ອຳນາດການປົກຄອງແຂວງ ຫຼື ອຳນາດການ

ປົກຄອງທ້ອງຖິ່ນ ແລະ ອົງກອນຄຸ້ມຄອງເອກະຊົນ ເພື່ອດຳເນີນບາດກ້າວທີ່ຈຳເປັນໃນຂັ້ນຂອງຕົນເພື່ອ ຈັດຕັ້ງປະຕິບັດຄູ່ມືນີ້.

## 9. ການຊ່ວຍເຫຼືອໃນຂົງເຂດ ແລະ ສາກົນເພື່ອສ້າງຂີດຄວາມສາມາດພາຍໃນ

1. ເພື່ອເປັນການເພີ່ມການຟື້ນຟູຈິດໃຈ ແລະ ການຫຼຸດຜ່ອນຄວາມຕ້ອງການການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຈາກສາກົນນັ້ນ, ບັນດາອົງການຈັດຕັ້ງສາກົນທີ່ປະກອບດ້ວຍຜູ້ໃຫ້ທຶນ, ຜູ້ກ່ຽວຂ້ອງປະຈຳຂົງເຂດ ແລະ ອື່ນໆນັ້ນຄວນຊຸກຍູ້ລັດທີ່ກຳລັງພັດທະນາ, ສັງຄົມພົນລະເຮືອນ ແລະ ສາມາຄົມກາແດງ ແລະ ຊີກວົງເດືອນແດງເພື່ອສ້າງຂີດຄວາມສາມາດໃຫ້ແກ່ເຂົາເຈົ້າໄດ້ສາມາດປ້ອງກັນ, ແກ້ໄຂ, ກຽມພ້ອມ ແລະ ຮັບມືກັບໄພພິບັດທີ່ເກີດຂຶ້ນພາຍໃນ.
2. ສະມາຄົມລະຫວ່າງປະເທດຄວນຈະສະໜັບສະໜູນລັດທີ່ກຳລັງພັດທະນານັ້ນໄດ້ສ້າງຂີດຄວາມສາມາດເພື່ອປະຕິບັດກົດໝາຍ, ນະໂຍບາຍ ແລະ ໂຄງສ້າງນະໂຍບາຍສະຖານບັນຢ່າງພຽງພໍ ເພື່ອອຳນວຍຄວາມສະດວກໃຫ້ແກ່ການບັນເທົາທຸກໄພພິບັດ ແລະ ຟື້ນຟູໃນໄລຍະເລີ່ມຕົ້ນສາກົນ. ຜູ້ກ່ຽວຂ້ອງຄວນໃຫ້ການສະໜັບສະໜູນໃຫ້ແກ່ລັດທີ່ມີລັກສະນະປະສານງານນີ້.

# ພາກທີ 3: ການເລີ່ມລົງມື ແລະ ການສິ້ນສຸດຂອງການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນສາກົນ.

## 10. ການເລີ່ມລົງມື

1. ການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຄວນເລີ່ມລົງມືໃນເວລາທີ່ລັດທີ່ໄດ້ຮັບຜົນກະທົບເຫັນດີນຳ ແລະ ຕາມຫຼັກການແລ້ວຕ້ອງໄດ້ຍື່ນການສະເໜີຂໍຄວາມຊ່ວຍເຫຼືອເສຍກ່ອນ. ລັດທີ່ໄດ້ຮັບຜົນກະທົບຄວນຕັດສິນໃຈໃຫ້ໄວວ່າຈະສະເໜີຂໍຄວາມຊ່ວຍເຫຼືອການບັນເທົາທຸກ ແລະ ການຟື້ນຟູໃນເບື້ອງຕົ້ນ ແລະ ວ່າຈະຕ້ອງໄດ້ແຈ້ງການຕັດສິນໃຈນັ້ນທັນທີຫຼືບໍ່. ເພື່ອທີ່ຈະຕັດສິນໃຈ, ລັດທີ່ໄດ້ຮັບຜົນກະທົບຄວນຈະຕ້ອງປະເມີນຄວາມຕ້ອງການຢ່າງຮີບດ່ວນ ແລະ ຄວນພິຈາລະນາເຮັດການປະເມີນຜົນຄວາມຕ້ອງການຮ່ວມກັບສະຫະປະຊາຊາດ ແລະ ອົງການຊ່ວຍເຫຼືອມະນຸດຊະທຳ.
2. ການສະເໜີຂໍ ແລະ ສະເໜີໃຫ້ການຊ່ວຍເຫຼືອຄວນຈຳເພາະເຈາະຈົງປະເພດ ແລະ ຈຳນວນຂອງເຄື່ອງບັນເທົາທຸກ ພ້ອມທັງການບໍລິການ ແລະ ວິຊາການທີ່ມີຢູ່ ຫຼື ທີ່ຕ້ອງການນັ້ນໃຫ້ຫຼາຍທີ່ສຸດ. ນອກຈາກນີ້, ລັດທີ່ໄດ້ຮັບຜົນກະທົບອາດຈະແຈ້ງໃຫ້ຮູ້ວ່າປະເພດຂອງເຄື່ອງ ແລະ ການບໍລິການບັນເທົາທຸກໃດທີ່ບໍ່ຕ້ອງການ.
3. ລັດທີ່ໄດ້ຮັບຜົນກະທົບຄວນມີຂໍ້ມູນກ່ຽວກັບກົດໝາຍແລະກົດລະບຽບພາຍໃນທີ່ກ່ຽວຂ້ອງການເຂົ້າມາ ແລະ ດຳເນີນການຊ່ວຍເຫຼືອການບັນເທົາທຸກ ແລະ ການຟື້ນຟູໄພພິບັດໃນເບື້ອງຕົ້ນ ຢ່າງພຽງພໍໃຫ້ແກ່ຜູ້ທີ່ໃຫ້ການຊ່ວຍເຫຼືອ.

## 11. ການເລີ່ມລົງມືການບັນເທົາທຸກຂອງທະຫານ

ຊັບສິນບັດທາງທະຫານຄວນຖືກນຳມາໃຊ້ເພື່ອນຳໃຊ້ເຂົ້າໃນການຊ່ວຍເຫຼືອການບັນເທົາທຸກໄພພິບັດ ຫຼື ການຟື້ນ ຟູໃນໄລຍະເລີ່ມຕົ້ນໃນເວລາທີ່ມີການສະເໜີຂໍ ຫຼື ມີການການອະນຸມັດຈາກລັດທີ່ໄດ້ຮັບຜົນກະທົບ ເທົ່ານັ້ນ ຫຼັງ ຈາກທີ່ພິຈາລະນາແລ້ວວ່າບໍ່ມີທາງເລືອກອື່ນໆທີ່ດີກວ່າ. ກ່ອນທີ່ຈະນຳໃຊ້ຊັບສິນທາງທະຫານນັ້ນ, ລັດທີ່ໄດ້ຮັບ ຜົນ ກະທົບ ແລະ ລັດທີ່ໃຫ້ການຊ່ວຍເຫຼືອຈະຕ້ອງໄດ້ຕົກລົງເງື່ອນໄຂຕ່າງໆກັນເສຍກ່ອນ (ລວມ ທັງບັນຫາໄລຍະເວ ລາທີ່ນຳໃຊ້ຊັບສິນທາງທະຫານວ່າຈະຕ້ອງໄດ້ປົດອາວຸດກ່ອນ ຫຼື ມີການປະ ກອບອາວຸດ, ການນຳໃຊ້ເຄື່ອງແບບທີ່ເປັນສັນຍາລັກຊາດ ແລະ ກົນໄກອື່ນໆສຳລັບການຮ່ວມມືກັບຜູ້ກ່ຽວຂ້ອງທີ່ເປັນພົນ ລະເຮືອນ)

## 12. ການສິ້ນສຸດການຊ່ວຍເຫຼືອ

ເມື່ອລັດທີ່ໄດ້ຮັບຜົນກະທົບ ຫຼື ຜູ້ທີ່ໃຫ້ການຊ່ວຍເຫຼືອຢາກຈະສິ້ນສຸດການບັນເທົາທຸກ ຫຼື ການຊ່ວຍເຫຼືອຟື້ນຢູ ໃນເບື້ອງຕົ້ນນັ້ນ, ລັດດັ່ງກ່າວຈະຕ້ອງໄດ້ມີການແຈ້ງການຢ່າງເໝາະສົມ. ໃນເມື່ອມີການແຈ້ງການນັ້ນ, ລັດທີ່ ໄດ້ຮັບຜົນກະທົບ ແລະ ຜູ້ທີ່ໃຫ້ການຊ່ວຍເຫຼືອນັ້ນຄວນປຶກສາຫາລືກັນ ໂດຍຕ້ອງຄຳນຶງເຖິງຜົນກະທົບຂອງ ການສິ້ນສຸດການຊ່ວຍເຫຼືອນີ້ວ່າຈະມີຜົນກະທົບຕໍ່ຊຸມຊົນຜູ້ທີ່ຖືກກະທົບນີ້ແນວໃດ.

# ພາກທີ 4: ສິດທິທີ່ຈະໄດ້ຮັບສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍ

## 13. ສິ່ງອຳນວຍຄວາມສະດວກສຳລັບອົງການຈັດຕັ້ງຊ່ວຍເຫຼືອດ້ານມະນຸດສະທຳ

ຂໍແນະນຳວ່າລັດທາງຜ່ານ ແລະ ລັດທີ່ໄດ້ຮັບຜົນກະທົບນັ້ນໄດ້ຕອບສະໜອງສິ່ງອຳນວຍຄວາມສະດວກ ທາງ ດ້ານກົດໝາຍດັ່ງທີ່ໄດ້ລະບຸໄວ້ໃນພາກທີ ໔ ໃຫ້ແກ່ລັດທີ່ໃຫ້ການຊ່ວຍເຫຼືອໄປຕາມການບັນເທົາທຸກໄພ ພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ.

## 14. ສິ່ງອຳນວຍຄວາມສະດວກສຳລັບອົງການຊ່ວຍເຫຼືອດ້ານມະນຸດສະທຳ

1. ໂດຍອີງຕາມກົດໝາຍລະຫວ່າງປະເທດ, ມັນເປັນອິພິສິດຂອງລັດຕົ້ນກຳເນີດ, ລັດທາງຜ່ານ ແລະ ລັດ ທີ່ໄດ້ຮັບຜົນກະທົບທີ່ຈະກຳນົດວ່າອົງການມະນຸດສະທຳທີ່ໃຫ້ການຊ່ວຍເຫຼືອໃດຈະມີສິດທີ່ຈະ ໄດ້ຮັບ ສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍທີ່ໄດ້ລະບຸໄວ້ໃນພາກທີ ໕ ທີ່ກ່ຽວກັບການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ.
2. ຂໍແນະນຳວ່າລັດຕ່າງໆນັ້ນຈະຕ້ອງໄດ້ສ້າງເງື່ອນໄຂສຳລັບອົງການຊ່ວຍເຫຼືອດ້ານມະນຸດສະທຳທີ່ ຕ້ອງ ການສິດທີ່ຈະໄດ້ຮັບສິ່ງອຳນວຍຄວາມສະດວກ. ເງື່ອນໄຂເຫຼົ່ານີ້ຄວນປະກອບດ້ວຍການສະແດງເຖິງ ຄວາມພ້ອມ ແລະ ຂີດຄວາມສາມາດຂອງອົງການຈັດຕັ້ງດັ່ງກ່າວເພື່ອຈະປະຕິບັດຕາມພາລະບົດບາດ ໜ້າທີ່ຮັບຜິດຊອບທີ່ໄດ້ລະບຸໄວ້ໃນວັກທີ 4 ຂອງຄູ່ມືສະບັບນີ້.
3. ເງື່ອນໄຂອື່ນໆທີ່ຈະກຳນົດໄວ້ສຳລັບອົງການຊ່ວຍເຫຼືອດ້ານມະນຸດສະທຳນັ້ນຄວນຈະຕ້ອງບໍ່ເປັນພາລະ ໃຫ້ແກ່ການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນເກີນໄປ.
4. ລັດທີ່ໃຫ້ສິ່ງອຳນວຍຄວາມສະດວກຄວນກຳນົດສິດທີ່ຈະໄດ້ຮັບ ກ່ອນເຫດການໄພພິບັດ ຫຼື ທັນທີຫຼັງ ຈາກທີ່ເລີ່ມເກີດມີໄພພິບັດ. ຂັ້ນຕອນ ແລະ ກົນໄກປະຕິບັດຈະຕ້ອງງ່າຍດາຍ ແລະ ວ່ອງໄວທີ່ສຸດ. ຂັ້ນ

ຕອນ ແລະ ກົນໄກນີ້ຈະຕ້ອງໄດ້ລະບຸໄວ້ຢ່າງຊັດເຈນ ແລະ ຂໍ້ມູນກ່ຽວກັບຂັ້ນຕອນ ແລະ ກົນໄກນີ້ຈະຕ້ອງມີໄວ້ໂດຍບໍ່ຕ້ອງເສຍຄ່າໃດໆ. ຂັ້ນຕອນ ແລະ ກົນໄກເລົ່ານີ້ອາດຈະປະກອບດ້ວຍການນຳໃຊ້ປຶ້ມລາຍຊື່ທະຫານທີ່ຈະລົງໄປໃຫ້ການບັນເທົາທຸກ, ຂໍ້ຕົກລົງຮ່ວມມືສອງຝ່າຍ ຫຼື ການອາໃສລະບົບການແຕ່ງຕັ້ງທູດລະຫວ່າງປະເທດ ຫຼື ຂົງເຂດ, ຖ້າມີ.

5. ການລະບຸສິ່ງອຳນວຍຄວາມສະດວກທາງດ້ານນິຕິກຳໄວ້ໃນພາທີ 5 ຄວນເຮັດໃຫ້ຂຶ້ນກັບການປະຕິ ບັດຕາມຂໍ້ກຳນົດຂອງພາກຍ່ອຍທີ ໔ ຂອງວັກນີ້. ເຖິງຢ່າງໃດກໍ່ຕາມ, ການມີສິດທີ່ຈະໄດ້ຮັບສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍນັ້ນຈະຕ້ອງບໍ່ຖືກປ່ຽນແປງຕາມອຳເພີໃຈ, ມີຜົນຍ້ອນຫຼັງ ຫຼື ປາດສະຈາກການແຈ້ງການທີ່ແທດເໝາະກັບກໍລະນີດັ່ງກ່າວ.

## 15. ສິ່ງອຳນວຍຄວາມສະດວກສຳລັບຜູ້ໃຫ້ການຊ່ວຍເຫຼືອອື່ນໆ

ອີງຕາມຄຳສະເໜີຂໍ, ລັດທີ່ໄດ້ຮັບຜົນກະທົບອາດຍັງຢາກຈະມອບສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍທີ່ລະບຸໃນພາກທີ 5 ສ່ວນໃດສ່ວນໜຶ່ງໃຫ້ແກ່ຜູ້ໃຫ້ການຊ່ວຍເຫຼືອຕ່າງໆນອກຈາກບັນດາຜູ້ໃຫ້ການຊ່ວຍເຫຼືອທີ່ລະບຸໄວ້ໃນວັກທີ 15 ແລະ ວັກທີ 14 ເຊັ່ນ: ບໍລິສັດເອກະຊົນທີໃຫ້ການບັນເທົາທຸກດ້ວຍການບໍລິຈາກເຊິ່ງມັນຈະສົ່ງຜົນກະທົບທາງລົບຕໍ່ການປະຕິບັດງານຂອງອົງການຊ່ວຍເຫຼືອດ້ານມະນຸດສະທຳ ຫຼື ລັດທີ່ໃຫ້ການຊ່ວຍເຫຼືອ.

# ພາກທີ 5: ເງື່ອນໄຂອຳນວຍຄວມສະດວກທາງດ້ານກົດໝາຍ ເພື່ອເຂົ້າໄປ ແລະ ດຳເນີນການຊ່ວຍເຫຼືອ.

ຂໍແນະນຳວ່າລັດຄວນຕອບສະໜອງສິ່ງອຳນວຍຄວາມສະດວກທາງດ້ານກົດໝາຍທີ່ໄດ້ລະບຸໄວ້ໃນວັກທີ 16 ຫາ 24 ໃຫ້ແກ່ລັດທີ່ໃຫ້ການຊ່ວຍເຫຼືອ ຫຼື ອົງການມະນຸດສະທຳທີ່ມີສິໄດ້ຮັບສິດນັ້ນ. ມັນເປັນສິ່ງທີ່ເຂົ້າໃຈກັນດີວ່າການອະນຸມັດສິ່ງອຳນວຍຄວາມສະດວກດັ່ງກ່າວນັ້ນຈະຕ້ອງຂຶ້ນກັບສິດທິຜົນປະໂຫຍດທາງດ້ານປ້ອງກັນຄວາມສະງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສຸຂະພາບຂອງສາທາລະນະຊົນ ແລະ ສິ່ງແວດລ້ອມ, ແລະ ສິນລະທຳສັງຄົມຂອງລັດທີ່ໄດ້ຮັບຜົນກະທົບ, ລັດຕົ້ນກຳເນີດ ແລະ ລັດຂ້າມຜ່ານ. ມາດຕະການເພື່ອປົກປ້ອງສິດຜົນປະໂຫຍດດັ່ງກ່າວຄວນຖືກປັບປຸງໃຫ້ແທດເໝາະກັບສະພາບການສຸກເສີນຂອງເຫດການໄພພິບັດນັ້ນ ແລະ ຕ້ອງສອດຄ່ອງກັບຄວາມຮີບດ່ວນທາງດ້ານນຸດສະທຳ ເພື່ອແກ້ໄຂຄວາມຕ້ອງການຂອງຊຸມຊົນທີ່ໄດ້ຮັບຜົນກະທົບ. ຖ້າຫາກວ່າອຳນາດການປົກຄອງທ້ອງຖິ່ນມີຄວາມສະມາດທີ່ຈະຕອບສະໜອງສິ່ງອຳນວຍຄວາມສະດວກສະເພາະໃດໜຶ່ງ ນອກເໜືອຈາກລັດຖະບານແຫ່ງຊາດແລ້ວ, ລັດຖະບານແຫ່ງຊາດຄວນ, ຖ້າເປັນໄດ້ ແລະ ເໝາະສົມ, ສະໜັບສະໜຸນອຳນາດການປົກຄອງເລົ່ານັ້ນໄດ້ຕອບສະໜອງສິ່ງອຳນວຍຄວາມສະດວກທີ່ກ່ຽວຂ້ອງໃຫ້ແກ່ລັດທີ່ໃຫ້ການຊ່ວຍເຫຼືອ ຫຼື ອົງການມະນຸດສະທຳທີ່ມີສິດຈະໄດ້ຮັບ.

## 16. ບຸກຄະລາກອນບັນເທົາທຸກ

1. ກ່ຽວກັບບຸກຄະລາກອນການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຂອງລັດ ທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການມະນຸດສະທຳທີ່ມີສິດຈະໄດ້ຮັບນັ້ນ, ລັດທີ່ໄດ້ຮັບຜົນກະທົບຄວນຈະ:

ກ. ອອກວີຊ່າ ແລະ ໜັງສືອະນຸຍາດເຮັດວຽກທີ່ຈຳເປັນ, ຈະໃຫ້ດີຈະຕ້ອງບໍ່ໄດ້ເສຍຄ່າຫຍັງໝົດ, ທີ່ສາມາດເຂົ້າອອກ ແລະ ຕໍ່ອາຍຸໄດ້ຫຼາຍຄັ້ງພາຍໃນດິນແດນຂອງຕົນ ສຳລັບເວລາທີ່ຈຳເປັນເພື່ອດຳເນີນກິດຈະກຳການບັນເທົາທຸກໄພພິບັດ ແລະ ການຟື້ນຟູໃນເບື້ອງຕົ້ນ.

ຂ. ໃນການເຄື່ອນໄຫວການບັນເທົາທຸກນັ້ນ, ຍົກເວັ້ນ ຫຼື ເລັ່ງການອອກວີຊ່າ ແລະ ໜັງສືອະນຸຍາດເຮັດວຽກໃຫ້ໄວທີ່ສຸດ.

ຄ. ສ້າງຂັ້ນຕອນສຳລັບການຮັບຮູ້ຊົ່ວຄາວຄຸນວຸດທິຂອງບຸກຄະລາກອນການແພດຕ່າງປະເທດ, ສະຖາປານິດ ແລະ ວິສະວະກອນ, ໃບຂັບຂີ່ ແລະ ໃບອະນຸຍາດອື່ນໆ ແລະ ໃບຢັ້ງຢືນຕ່າງທີ່ຈຳເປັນສຳລັບການເຄື່ອນໄຫວວຽກງານການບັນເທົາທຸກ ແລະ ການຟື້ນຟູໃນເບື້ອງຕົ້ນ ແລະ ທີ່ຖືວ່າໄດ້ຮັບການຢັ້ງຢືນວ່າມັນເປັນເອກະສານຂອງແທ້ໂດຍລັດທີ່ໃຫ້ການຊ່ວຍເຫຼືອ ຫຼື ອົງການມະນຸດສະທຳທີ່ມີສິດຈະໄດ້ຮັບ ທີ່ກ່ຽວຂ້ອງໃນເວລາທີ່ຈຳເປັນຕ້ອງໄດ້ດຳເນີນກິດຈະກຳບັນເທົາທຸກ ແລະ ການຟື້ນຟູໃນເບື້ອງຕົ້ນ.

ງ. ອຳນວຍຄວາມສະດວກໃຫ້ການເຂົ້າອອກສະຖານທີ່ໄດ້ຮັບຜົນກະທົບ ຢ່າງເສລີ ໂດຍຄຳນຶງເຖິງຄວາມປອດໄພຂອງບຸກຄະລາກອນບັນເທົາທຸກ ແລະ ການຟື້ນຟູໃນເບື້ອງຕົ້ນ.

2. ຕາມການສະເໜີ, ລັດຕົ້ນກຳເນີດ ແລະ ລັດຂ້າມຜ່ານຄວນຈະຍົກເວັ້ນ ຫຼື ອອກວີຊາດອອກ ຫຼື ຜ່ານ, ດີແທ້ຈະຕ້ອງບໍ່ໄດ້ເສຍຄ່າໃດໆທັງໝົດ, ໃຫ້ໄວທີ່ສຸດ ຕາມຄວາມເໝາະສົມ. ໃຫ້ແກ່ບຸກຄະລາກອນບັນເທົາທຸກໄພພິບັດ ແລະ ຟື້ນຟູໃນເບື້ອງຕົ້ນ ຂອງອົງການຊ່ວຍເຫຼືອດ້ານມະນຸດ ສະທຳທີ່ຈະໄດ້ຮັບສິດ.

3. ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳທີ່ຈະໄດ້ຮັບສິດນັ້ນຄວນພິຈາລະນາວ່າຈະປະຕິບັດຕາມຈຸດປະສົງການບັນເທົາທຸກໄພພິບັດ ແລະ ການຟື້ນຟູໃນເບື້ອງຕົ້ນໄດ້ຫຼາຍເທົ່າໃດ ໂດຍ ຈ້າງພະນັກງານທ້ອງຖິ່ນ.

## 17. ເຄື່ອງ ແລະ ອຸປະກອນບັນເທົາທຸກ

1. ກ່ຽວກັບເຄື່ອງ ແລະ ອຸປະກອນການບັນເທົາທຸກໄພພິບັດ ແລະ ການຟື້ນຟູໃນເບື້ອງຕົ້ນທີ່ໄດ້ສົ່ງອອກ ຫຼື ນຳເຂົ້າ ໂດຍ ຫຼື ຕາງໜ້າໃຫ້ແກ່ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳທີ່ຈະໄດ້ຮັບສິດ, ລັດຕົ້ນກຳເນີດ, ລັດຂ້າມຜ່ານ ແລະ ລັດທີ່ໄດ້ຮັບຜົນກະທົບຄວນຈະ:

   ກ. ຍົກເວັ້ນພາສີອາກອນ ແລະ ຄ່າທຳນຽມຕ່າງໆຂອງລັດຖະບານ;

   ຂ. ຍົກເວັ້ນເຄື່ອງ ແລະ ອຸປະກອນບັນເທົາທຸກເລົ່ານີ້ຈາກການຈຳກັດຫ້າມການສົ່ງອອກ, ການຂ້າມຜ່ານ ແລະ ການນຳເຂົ້າ.

   ຄ. ເຮັດໃຫ້ເງື່ອນໄຂຂັ້ນຕອນເອກະສານໃຫ້ງ່າຍຂຶ້ນ ແລະ ໜ້ອຍທີ່ສຸດສຳລັບການສົ່ງອອກ, ຂ້າມຜ່ານ ແລະ ການນຳເຂົ້າ;

   ງ. ອະນຸຍາດການສົ່ງອຸປະກອນບັນເທົາທຸກອອກຄືນ ຫຼື ເຄື່ອງບັນເທົາທຸກທີ່ບໍ່ໄດ້ນຳໃຊ້ທີ່ລັດທີ່ໃຫ້ການຊ່ວຍເຫຼືອ ຫຼື ອົງການຊ່ວຍເຫຼືອດ້ານມະນຸດສະທຳເປັນເຈົ້າຂອງ ແລະ ຢາກຈະເອົາຄືນ.

2. ກ່ຽວກັບເຄື່ອງ ແລະ ອຸປະກອນບັນເທົາທຸກໄພພິບັດເທົ່ານັ້ນ, ລັດຕົ້ນກຳເນີດ, ຂ້າມຜ່ານ ແລະ ລັດທີ່ໄດ້ຮັບຜົນກະທົບຄວນຈະ:

   ກ. ຍົກເວັ້ນ ຫຼື ຫຼຸດຜ່ອນເງື່ອນໄຂການກວດກາເຄື່ອງ; ຖ້າຫາກວ່າການຍົກເວັ້ນເປັນບໍ່ໄດ້ນັ້ນ, ກໍ່ໃຫ້ແຈ້ງເອກະ ສານເຄື່ອງ ແລະ ອຸປະກອນບັນເທົາທຸກທັນທີ ແລະ ຖືວ່າເປັນວຽກບຸລິມະສິດ ໂດຍຜ່ານຂັ້ນຕອນແຈ້ງພາສີຖ້າ ເປັນໄດ້; ແລະ

ຂ. ດຳເນີນການກວດກາ ແລະ ເອົາເຄື່ອງອອກໃນຊ່ວງນອກໂມງລັດຖະການ ຫຼື ສະຖານທີ່ອື່ນໆທີ່ບໍ່ແມ່ນດ່ານ ພາສີ ຕາມຄວາມຈຳເປັນເພື່ອຫຼຸດຜ່ອນຄວາມລ່າຊ້າ ໂດຍປະຕິບັດຕາມຂັ້ນຕອນການປ້ອງກັນຄວາມສະງົບ ຂອງລັດທີ່ໄດ້ຮັບຜົນກະທົບ. ລັດທີ່ໃຫ້ການຊ່ວຍເຫຼືອ ຫຼື ອົງການຊ່ວຍເຫຼືອດ້ານມະນຸດສະທຳທີ່ໄດ້ຮັບສິດ ຄວນເຄົາລົບເສັ້ນທາງ ແລະ ຈຸດສົ່ງເຄື່ອງຕ່າງໆດັ່ງທີ່ລັດທີ່ໄດ້ຮັບຜົນກະທົບໄດ້ກຳນົດໄວ້.

3. ເພື່ອໄດ້ຮັບຜົນປະໂຫຍດຈາກສິ່ງອຳນວຍຄວາມສະດວກທີ່ກ່າວມາຂ້າງເທິງນັ້ນ, ລັດທີ່ໃຫ້ການຊ່ວຍເຫຼືອແລະອົງການຊ່ວຍເຫຼືອດ້ານມະນຸດສະທຳຄວນຫຸ້ມຫໍ່ເຄື່ອງ, ຈັດປະເພດ ແລະ ເຮັດເຄື່ອງໝາຍໃສ່ເຄື່ອງ ແລະ ອຸປະກອນບັນເທົາທຸກ ເພື່ອປະຕິບັດຕາມມາດຕະຖານສາກົນ ແລະ ຄວນປະກອບເອົາລາຍການ ເຄື່ອງທີ່ນຳເຂົ້າໃນແຕ່ລະຖົງໃຫ້ລະອຽດ. ລັດ ແລະ ອົງການດັ່ງກ່າວຄວນຈະກວດກາເຄື່ອງ ແລະ ອຸປະກອນ ບັນເທົາທຸກໆຢ່າງຕື່ມອີກ ເພື່ອຮັບປະກັນຄຸນນະພາບ, ຄວາມເໝາະສົມກັບຄວາມຕ້ອງການໃນລັດທີ່ໄດ້ຮັບຜົນກະທົບ; ແລະ ການປະຕິບັດຕາມກົດໝາຍແຫ່ງຊາດຂອງລັດທີ່ໄດ້ຮັບຜົນກະທົບນັ້ນ ແລະ ຕາມມາດຕະຖານສາກົນ.

4. ລັດທີ່ໄດ້ຮັບຜົນກະທົບ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳທີ່ມີສິດຄວນຄຳນຶງເຖິງຄວາມຮັບຜິດຊອບໃນການເຄື່ອນຍ້າຍ ຫຼື ຖິ້ມເຄື່ອງບັນເທົາທຸກທີ່ບໍ່ຕ້ອງການ ຫຼື ບໍ່ໄດ້ໃຊ້ ໂດຍສະເພາະຖ້າຫາກວ່າເຄື່ອງບັນເທົາທຸກເລົ່ານັ້ນຫາກຄຸກຄາມສຸຂະພາບຫຼື ຄວາມປອດໄພຂອງຄົນ ຫຼື ຕໍ່ສະພາບແວດລ້ອມ.

## 18. ເຄື່ອງ ແລະ ອຸປະກອນບັນເທົາທຸກພິເສດ

ນອກຈາກສິ່ງອຳນວຍຄວາມສະດວກທີ່ໄດ້ລະບຸໄວ້ໃນວັກທີ 17 ແລ້ວ:

1. ລັດທີ່ໄດ້ຮັບຜົນກະທົບຄວນອະນຸຍາດໃຫ້ຍານພາຫະນະຂອງລັດທີ່ໃຫ້ການຊ່ວຍເຫຼືອ ຫຼື ອົງການຊ່ວຍເຫຼືອດ້ານມະນຸດສະທຳ ຫຼື ຜູ້ຕາງໜ້າ ທີ່ຂົນສົ່ງນຳສິນຄ້າປະເທດເຂົ້າໃນລັດໄດ້ມີເລກ ແລະ ປ້າຍທະບຽນຊົ່ວຄາວ ເພື່ອຮັບໃຊ້ວຽກງານບັນເທົາທຸກ ແລະ ການຟື້ນຟູໃນເບື້ອງຕົ້ນ.
2. ລັດທີ່ໄດ້ຮັບຜົນກະທົບຄວນຍົກເວັ້ນ ຫຼື ເລັ່ງການອະນຸມັດໃບອະນຸຍາດ ແລະ ຫຼຸດຜ່ອນສິ່ງກີດຂວາງຕໍ່ການນຳໃຊ້, ການນຳເຂົ້າ ຫຼື ສົ່ງອອກຂອງອຸປະກອນການສື່ສານແລະເຕັກໂນໂລຊີຂໍ້ມູນຂ່າວສານທີ່ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມນະນຸດຊະທຳ, ຫຼື ຜູ້ຕາງໜ້າຂອງ ຕົນໄດ້ຕອບສະໜອງໃຫ້ໃນການບັນເທົາໄພພິບັດແລະຟື້ນຟູໃນເບື້ອງຕົ້ນ. ນອກຈາກນີ້, ລັດທີ່ໄດ້ ຮັບຜົນກະທົບ (ຫຼືເມື່ອໃດທີ່ເປັນໄປໄດ້ນັ້ນກໍ່ຊັກຊວນໃຫ້ຜູ້ໃຫ້ການຊ່ວຍເຫຼືອພາຍໃນອື່ນອອກອະນຸມັດ) ຄວນອະນຸຍາດລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳໄດ້ນຳໃຊ້ລະດັບຄວາມກວ້າງຂອງຂອງສາຍຄວາມຖີ່, ຄື້ນຄວາມຖີ່ ແລະ ຈານຮັບສັນຍາດາວທຽມສຳລັບການສື່ສານ ແລະ ສົ່ງຕໍ່ຂໍ້ມູນທີ່ກ່ຽວຂ້ອງກັບ ການ ປະຕິບັດວຽກງານບັນເທົາທຸກ
3. ລັດຕົ້ນກຳເນີດ, ລັດຂ້າມຜ່ານ ແລະ ລັດທີ່ໄດ້ຮັບຜົນກະທົບ ຄວນຫຼຸດຜ່ອນສິ່ງກີດຂວາງດ້ານກົດໝາຍ ແລະ ການບໍລິຫານການສົ່ງອອກ, ການຂ້າມຜ່ານ, ການນຳເຂົ້າ ແລະ ການສົ່ງອອກຄືນອຸປະກອນການຢາ ແລະ ການແພດໂດຍ ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳ ຫຼື ຜູ້ຕາງໜ້າຂອງຕົນໃນການບັນເທົາທຸກ ແລະ ການຟື້ນຟູໃນເບື້ອງຕົ້ນ ເພື່ອໃຫ້ສອດຄ້ອງກັບ ຄວາມປອດໄພຂອງສັງຄົມ ແລະ ກົດໝາຍລະຫວ່າງປະເທດ. ລັດທີ່ໃຫ້ການຊ່ວຍເຫຼືອ

ແລະອົງການຊ່ວຍເຫຼືອດ້ານມະນຸດສະທຳຄວນດຳເນີນຂັ້ນຕອນເພື່ອຮັບປະກັນຄຸນນະພາບ, ຄວາມແທດເໝາະ ແລະ ຄວາມປອດໄພຂອງອຸປະກອນການຢາ ແລະ ການແພດດັ່ງກ່າວ ແລະ ໂດຍສະເພາະແມ່ນ:

ກ. ການຢາທີ່ເຂົາເຈົ້າຈະນຳເຂົ້າ ຄວນຕ້ອງໄດ້ຮັບການອະນຸມັດໃນການນຳໃຊ້ໃນລັດຕົ້ນກຳເນີດ ແລະ ລັດທີ່ໄດ້ຮັບຜົນກະທົບ;

ຂ. ການຢາທີ່ເຂົາເຈົ້າຈະນຳໃຊ້ປະຕິບັດການບັນເທົາທຸກນັ້ນຄວນຈະ:

I. ຖືກຂົນສົ່ງ ແລະ ຮັກສາໄວ້ໃນສະພາບທີ່ແທດເໝາະເພື່ອຮັບປະກັນວ່າຄຸນນະພາບຢານັ້ນ ຍັງດີຄືເກົ່າ; ແລະ

II. ຖືກປົກປ້ອງຈາກການຍັກຍອກ ແລະ ໃຊ້ໃນທາງທີ່ຜິດ.

ຄ. ຢາທີ່ເຂົາເຈົ້າບໍລິຈາກເພື່ອນຳໃຊ້ໂດຍຄົນອື່ນໆໃນລັດທີ່ໄດ້ຮັບຜົນກະທົບຄວນຈະ:

I. ມີອາຍຸກ່ອນວັນໝົດອາຍຸຢ່າງຕ່ຳສຸດ ໑໘ ເດືອນໃນເວລາມາເຖິງ, ນອກຈາກວ່າຈະໄດ້ຮັບການເຫັນດີຈາກອຳນາດການປົກຄອງທີ່ໄດ້ຮັບເຄື່ອງນັ້ນ;

II. ຖືກຂົນສົ່ງ ແລະ ຮັກສາໄວ້ໃນສະພາບທີ່ແທດເໝາະ ເພື່ອຮັບປະກັນວ່າຄຸນນະພາບຢານັ້ນຍັງດີຄືເກົ່າ,

III. ຖືກຕິດເຄື່ອງໝາຍທີ່ເປັນພາສາທີ່ເຂົ້າໃຈໄດ້ໃນປະເທດທີ່ໄດ້ຮັບຜົນກະທົບ ດ້ວຍຊື່ບໍ່ໄດ້ຈົດທະບຽນເປັນເຈົ້າຂອງຊັບສິນສາກົນ ຫຼື ຊື່ທົ່ວໄປ, ເລກໝວດສິນຄ້າ, ແບບຟອມປະລິມານຢາ, ຄວາມເຂັ້ມແຂງ, ຊື່ໂຮງງານຜູ້ຜະລິດ, ປະລິມານໃນຕູ້ຄອນເທນເນີ, ເງື່ອນໄຂໃນການເກັບຮັກສາ ແລະ ວັນໝົດອາຍຸ.

4. ລັດຕົ້ນກຳເນີດ, ລັດຂ້າມຜ່ານ ແລະ ລັດທີ່ໄດ້ຮັບຜົນກະທົບຄວນຈະພິຈາລະນາວ່າເງື່ອນໄຂທົ່ວໄປກ່ຽວກັບການອົບຄວັນ ແລະ ຂໍ້ຫ້າມອື່ນໆກ່ຽວກັບການນຳເຂົ້າ ແລະ ສົ່ງອອກອາຫານໂດຍລັດທີ່ໃຫ້ການຊ່ວຍເຫຼືອ ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳໃນການປະຕິບັດການບັນເທົາທຸກນັ້ນ ສາມາດນຳມາດັດແກ້ ຫຼື ຫຼຸດຜ່ອນໄດ້ຫຼື ບໍ່.

## 19. ການຂົນສົ່ງ

1. ລັດຕົ້ນກຳເນີດ, ລັດຂ້າມຜ່ານ ແລະ ລັດທີ່ໄດ້ຮັບຜົນກະທົບຄວນຈະອະນຸຍາດ, ໂດຍບໍ່ລໍຊ້າ, ໃຫ້ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳ ຫຼື ຜູ້ຕາງໜ້າສາມາດນຳເອົາຍານພາຫະນະຂ້າມຜ່ານດິນແດນ, ໜ້ານ້ຳທະເລ ແລະ ນ່ານຟ້າຂົນສົ່ງລຳລຽງການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ ແລະ ຈະດີແທ້ກໍ່ຄວນຍົກເວັ້ນຄ່າທຳນຽມຕ່າງໆ.
2. ການບິນຂ້າມນ່ານຟ້າ, ການລົງຈອດ ແລະ ການບິນອອກຈາກລັດ ຄວນຈະໄດ້ຮັບການອະນຸຍາດເປັນພິເສດ. ເຮືອບິນທີ່ໃຊ້ຂົນສົ່ງລຳລຽງນັ້ນຄວນໄດ້ຮັບສິດໃນການປະຕບັດວຽກໃນດິນແດນ ຂອງລັດທີ່ໄດ້ຮັບຜົນກະທົບຕາມຄວາມຈຳເປັນເພື່ອສົ່ງຄວາມຊ່ວຍເຫຼືອ.
3. ວີຊ່າຂາອອກ, ຂ້າມຜ່ານ ແລະ ຂາເຂົ້າສຳລັບບຸກຄະລາກອນທີ່ບັງຄັບພາຫະນະຄວນໄດ້ຮັບອະນຸມັດຢ່າງທັນທີ.

## 20. ສະຖານະພາບທາງດ້ານກົດໝາຍພາຍໃນຊົ່ວຄາວ

1. ລັດທີ່ໄດ້ຮັບຜົນກະທົບຄວນອະນຸຍາດໃຫ້ ອົງກອນຕ່າງໆຂອງ ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳໃນເວລາເຂົ້າ ຫຼື ຫຼັງຈາກນັ້ນທັນທີ ໄດ້ມີສິດທິຊົ່ວຄາວໃນການດຳເນີນການຊ່ວຍເຫຼືອໃນອານາເຂດຂອງເຂົາເຈົ້າຢ່າງຖືກກົດໝາຍ ເພື່ອຮັບສິດທິຕ່າງໆໃນການເປີດບັນຊີທະນາຄານ, ເຊັນສັນຍາ ຫຼື ການເຊົ່າອາຄານ, ຮຽກຮ້ອງ ແລະ ສະລະ ຊັບສິນ ແລະ ຂັ້ນຕອນທາງດ້ານກົດໝາຍ ເພື່ອຈຸດປະສົງຕອບສະໜອງການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ;
2. ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳຄວນໄດ້ຮັບສິດທິທີ່ຈະນຳເອົາທຶນຊ່ວຍເຫຼືອ ແລະ ສະກຸນເງິນທີ່ຈຳເປັນເຂົ້າແລະອອກປະເທດໄດ້ຢ່າງເສລີ ໂດຍຜ່ານສື່ກົດໝາຍ ແລະ ເພື່ອອັດຕາແລກປ່ຽນທີ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງກັບການບັນເທົາໄພພິບັດ ຫຼື ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ.
3. ລັດທີ່ໄດ້ຮັບຜົນກະທົບຄວນອະນຸຍາດໃຫ້ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳໄດ້ວ່າຈ້າງ ແລະ ຢຸດຕິສັນຍາຂອງບຸກຄະລາກອນທ້ອງຖິ່ນໄດ້ຢ່າງຖືກກົດໝາຍ.

## 21. ການເກັບອາກອນ

ລັດທີ່ໄດ້ຮັບຜົນກະທົບຄວນຈະໃຫ້ການຍົກເວັ້ນແກ່ ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳອາກອນມູນຄ່າເພີ່ມ ແລະ ອາກອນຫຼືພາສີອື່ນໆທີ່ພົວພັນໂດຍກົງກັບການບັນເທົາໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ.

## 22. ການປ້ອງກັນຄວາມສະຫງົບ

ລັດທີ່ໄດ້ຮັບຜົນກະທົບຄວນໃຊ້ມາດຕະຖານທີ່ເໝາະສົມເພື່ອເນັ້ນໜັກຄວາມປອດໄພ ແລະ ການປ້ອງກັນຄວາມສະຫງົບຂອງບຸກຄະລາກອນທີ່ໃຫ້ການບັນເທົາທຸກໄພພິບັດ ແລະ ການຟື້ນຟູໃນເບື້ອງຕົ້ນຂອງລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳ ແລະ ຄວາມປອດໄພຂອງສະຖານທີ່ຕັ້ງ, ສິ່ງອຳນວຍຄວາມສະດວກຕ່າງໆ, ຍານພາຫະນະຂົນສົ່ງ, ອຸປະກອນ ແລະ ເຄື່ອງບັນເທົາທຸກທີ່ໄດ້ນຳໃຊ້ທີ່ພົວພັນກັບການບັນເທົາໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ. ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳຄວນຈະດຳເນີນຂັ້ນຕອນດ້ວຍຕົນເອງໃນການວາງແຜນ ແລະ ການຈັດຕັ້ງປະຕິບັດເພື່ອຫຼຸດຜ່ອນ ຄວາມສ່ຽງຕ່າງໆ.

## 23. ການເຮັດວຽກນອກເວລາ

ລັດທີ່ໄດ້ຮັບຜົນກະທົບຄວນພະຍາຍາມຮັບປະກັນວ່າຫ້ອງການ ແລະ ສຳນັກງານຂອງລັດສາມາດເປີດໃຫ້ການບໍລິການໃນການອຳນວຍຄວາມສະດວກການປະຕິບັດໜ້າທີ່ການບັນເທົາທຸກໄພພິບັດສາກົນນອກຊົ່ວໂມງລັດຖະການ.

## 24. ຄ່າໃຊ້ຈ່າຍ

1. ໂດຍທົ່ວໄປແລ້ວຄ່າໃຊ້ຈ່າຍຈາກການບັນເທົາທຸກໄພພິບັດສາກົນ ຫຼື ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນຕາມຄູ່ມືນີ້ຄວນເກີດຂຶ້ນໃນລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳ. ເຖິງຢ່າງໃດກໍ່ຕາມ, ລັດທີ່ໃຫ້ການຊ່ວຍເຫຼືອອາດເຫັນດີກ່ອນລ່ວງໜ້າກັບລັດທີ່ໄດ້ຮັບຜົນກະທົບເພື່ອຂໍຄືນເງິນຄືນຄ່າໃຊ້ຈ່າຍ ແລະ ຄ່າທຳນຽມຕ່າງໆ ຫຼື ສຳລັບການຢືມອຸປະກອນຊົ່ວຄາວ.
2. ລັດທີ່ໄດ້ຮັບຜົນກະທົບຄວນພິຈາລະນາໃນເວລາທີ່ຕົນເອງຢູ່ໃນອຳນາດ ແລະເມື່ອເປັນໄປໄດ້ໃນບາງກໍລະນີ ຕອບສະໜອງການບໍລິການບາງຢ່າງໃນລາຄາທີ່ຫຼຸດ ຫຼື ບໍ່ ໄດ້ເສຍຄ່າໃດໆ ທັງໝົດຕໍ່ລັດທີ່ໃຫ້ການຊ່ວຍເຫຼືອ ແລະ ອົງການຊ່ວຍເຫຼືອດ້ານມະນຸດສະທຳ ເຊິ່ງອາດຈະປະກອບດ້ວຍ:
   ກ. ການຂົນສົ່ງພາຍໃນປະເທດ ລວມທັງສາຍການບິນແຫ່ງຊາດ;
   ຂ. ການນຳໃຊ້ອາຄານ ແລະ ທີ່ດິນເພື່ອເປັນສຳນັກງານແລະເປັນສາງເກັບເຄື່ອງ; ແລະ
   ຄ. ການນຳໃຊ້ອຸປະກອນລຳລຽງສິນຄ້າ ແລະ ການສະໜັບສະໜູນດ້ານການຂົນສົ່ງລຳລຽງ;

ມະຕິຕົກລົງທີ 4 ຂອງກອງປະຊຸມ ລະຫວ່າງ ປະເທດຄັ້ງທີ 30 ຂອງສະພາກາແດງ ແລະ ຊີກວົງເດືອນແດງ ການນຳໃຊ້ຄູ່ມືສຳລັບການອຳນວຍຄວາມສະດວກພາຍໃນ ແລະ ກົດລະບຽບຂອງການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງ ຕົ້ນ (ພະຈິກ 2007)

## **ມະຕິຕົກລົງທີ 4** ຂອງກອງປະຊຸມລະຫວ່າງປະເທດຄັ້ງທີ 30 ຂອງສະພາກາແດງ ແລະ ຊີກວົງເດືອນແດງ ການນໍາໃຊ້ຄູ່ມືສໍາລັບການອໍານວຍຄວາມສະດວກພາຍໃນ ແລະ ກົດລະບຽບຂອງການບັນເທົາທຸກໄພພິບັດ ແລະການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນ (ພະຈິກ 2007)

ກອງປະຊຸມລະຫວ່າງປະເທດຄັ້ງທີ 30 ຂອງສະພາກາແດງ ແລະ ຊີກວົງເດືອນແດງ

*ເປັນຫ່ວງນໍາ*ໂຊກສະຕາກໍາຂອງບັນດາຜູ້ທີ່ຕ້ອງການບັນເທົາທຸກສຸກເສີນແລະການຊ່ວຍເຫຼືອຟື້ນຟູຢ່າງຮີບດ່ວນໃນເວລາທີ່ເກີດມີເຫດການໄພພິບັດ

*ຢັ້ງຢືນ* ວ່າບັນຫາພື້ນຖານຂອງມວນມະນຸດ ແລະ ຂອງຊຸມຊົນລະຫວ່າງປະເທດກ່ຽວກັບສະພາບໄພພິບັດກໍ່ຄື ການປົກປ້ອງ ແລະ ສະຫວັດດີການຂອງບຸກຄົນ ແລະ ການປ້ອງກັນສິດທິມະນຸດຂັ້ນພື້ນຖານ ດັ່ງທີ່ໄດ້ລະບຸໃນການຖະແຫຼງການຫຼັກການສໍາລັບການບັນເທົາທຸກມະນຸດສະທໍາ ລະຫວ່າງ ປະເທດໃຫ້ແກ່ປະຊາຊົນພົນລະເຮືອນທີ່ຢູ່ໃນເຫດການໄພພິບັດເຊິ່ງໄດ້ນໍາໃຊ້ໃນກອງປະຊຸມຄັ້ງທີ 21 ຂອງສະພາກາແດງໃນປີ 1969.

***ຈື່ຈໍາ*** ວ່າຂະບວນການເຄື່ອນໄຫວກາແດງ ແລະ ຊີກວົງເດືອນແດງ ພິຈາລະນາສິດທິພື້ນຖານຂອງປະຊາຊົນທຸກໆ ຄົນເພື່ອສະເໜີໃຫ້ ແລະ ໄດ້ຮັບການຊ່ວຍເຫຼືອດ້ານມະນຸດຊະທໍາດັ່ງທີ່ໄດ້ລະບຸໄວ້ໃນຫຼັກການ ແລະ ກົດລະບຽບຂອງສະພາກາແດງ ແລະ ຊີກວົງເດືອນແດງໃນການບັນເທົາທຸກໄພພິບັດ ທີ່ໄດ້ຖືກດັດແກ້ໃນກອງ ປະຊຸມລະຫວ່າງ ປະເທດຂອງກາ ແດງ ແລະ ຊີກວົງເດືອນແດງຄັ້ງທີ 26 ໃນປີ 1995;

***ກ່າວຊໍ້າ*** ວ່າການປະຕິບັດການບັນເທົາທຸກເປັນການສະແດງໃຫ້ເຫັນເຖິງຄວາມສາມັກຄີລະຫວ່າງປະເທດແລະວ່າການໃຫ້ການບັນເທົາທຸກນັ້ນໄດ້ສ້າງສາຍພົວພັນແບບເພື່ອນມິດທີ່ດີລະຫວ່າງປະຊາຊົນໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ ແລະ ດັ່ງນັ້ນຈຶ່ງ ປະກອບສ່ວນເຂົ້າໃນການຮ່ວມແຮງຮ່ວມໃຈກັນສ້າງສັນຕິພາບໂລກ ດັ່ງທີ່ໄດ້ລະບຸໄວ້ໃນມະຕິຕົກລົງທີ 18 ຂອງກອງ ປະຊຸມລະຫວ່າງປະເທດຂອງສະພາກາແດງຄັ້ງທີ 20 ໃນປີ 1965.

***ຮັບຮູ້*** ວ່າ ສະມັດຊາໃຫຍ່ອົງການສະຫະປະຊາຊາດໄດ້ເນັ້ນໜັກເຖິງຄວາມສໍາຄັນຂອງການໃຫ້ການຊ່ວຍເຫຼືອດ້ານມະນຸດຊະທໍາໃຫ້ແກ່ບຸກຄົນທີ່ໄດ້ຮັບຜົນກະທົບຈາກໄພພິບັດຊໍ້າໄປຊໍ້າມາ ເຊິ່ງລວມທັງມະຕິຕົກລົງເລກທີ 48/182 ໃນປີ 1991, ເລກທີ 43/131 ໃນປີ 1998 ແລະ ເລກທີ 57/150 ໃນປີ 2002 ແລະ ມະຕິຕົກລົງຂອງສະມັດຊາໃຫຍ່ ອົງການສະຫະປະຊາຊາດເລກທີ 32/56 ໃນປີ 1977 ແລະ ມະຕິຕົກລົງທີ 6 ໃນກອງປະຊຸມລະຫວ່າງປະເທດຂອງສະພາກາແດງຄັ້ງທີ 23 ທີ່ໄດ້ນໍາໃຊ້ "ມາດຕະການການບັນເທົາທຸກແບບສຸກເສີນທີ່ເລັ່ງດ່ວນ" ເພື່ອອໍານວຍຄວາມສະດວກໃຫ້ແກ່ການປະຕິບັດການບັນເທົາທຸກລະຫວ່າງປະເທດ.

***ຈື່ຈໍາ*** ພັນທະທີ່ຊຸມຊົນລະຫວ່າງປະເທດໄດ້ດໍາເນີນໃນການຖະແຫຼງການສະຫະສະວັດໃນປີ 2000 ເພື່ອເພີ່ມການຮ່ວມມືໃຫ້ຫຼາຍຂຶ້ນ ເພື່ອຫຼຸດຜ່ອນຈໍານວນ ແລະ ຜົນກະທົບຂອງເຫດການໄພພິບັດທໍາມະຊາດ ແລະ ໄພພິບັດທີ່ເກີດຂຶ້ນດ້ວຍນໍ້າມືຄົນ ແລະ ໃນຖະແຫຼງການຮີໂອໂກ ແລະ ໂຄງສ້າງນະໂຍບາຍເພື່ອປະຕິບັດໃນປີ 2005 ເພື່ອປັບປຸງໂຄງ

ສ້າງສະຖາບັນ ແລະ ກົດໝາຍແຫ່ງຊາດ ແລະ ເພື່ອເຮັດໃຫ້ການກຽມພ້ອມຮັບມືກັບໄພພິບັດສຳລັບການຟື້ນຟູຈິດໃຈ ແລະ ການຮັບມືກັບໄພພິບັດໃນທຸກໆລະດັບທີ່ມີປະສິດທິພາບໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ;

***ຮັບຮູ້*** ພ້ອມທັງຂອບໃຈຕໍ່ການປະຕິບັດຂອງລັດຕ່າງໆທີ່ອຳນວຍຄວາມສະດວກໃຫ້ແກ່ການບັນເທົາທຸກໄພພິບັດລະຫວ່າງປະເທດ ແລະ ການຊ່ວຍເຫຼືອຟື້ນຟູໃນເວລາທີ່ຕ້ອງການ ແລະ ຕໍ່ການໃຫ້ຄວາມສົນໃຈ ແລະ ກິດຈະກຳຂອງຊຸມຊົນມະນຸດສະທຳລະຫວ່າງປະເທດທີ່ປັບປຸງການປະສານງານ ແລະ ປະສິດທິພາບຂອງການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໃຫ້ດີຂຶ້ນກວ່າເກົ່າ;

***ຍິນດີຕ້ອນຮັບ*** ເອົາຄວາມຄືບໜ້າທີ່ໄດ້ຮັບຈາກການຮ່ວມມື ແລະ ການປະຕິບັດງານຂອງກຸ່ມຄົ້ນຄວ້າ ແລະ ຄຳແນະນຳໃນການຊ່ວຍເຫຼືອລະຫວ່າງປະເທດ ໂດຍມີການຊຸກຍູ້ຈາກອົງການສະຫະປະຊາຊາດສຳລັບການປະສານງານວຽກງານມະນຸດຊະທຳ ແລະ ຄວາມພະຍາຍາມແບບລິເລີ່ມຂອງອົງການຊ່ວຍເຫຼືອດ້ານມະນຸດຊະທຳສາກົນເພື່ອສ້າງມາດຕະຖານ ແລະ ກົນໄກຄຸນນະພາບ ແລະ ການກວດສອບໄດ້ຕໍ່າສຸດສຳລັບການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູກໍ່ຄືລະບຽບປະຕິບັດສຳລັບຂະບວນການເຄື່ອນໄຫວສະພາກາແດງ ແລະ ຊີກວົງເດືອນແດງສາກົນ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານໃນການບັນເທົາທຸກໄພພິບັດໃນປີ 1994 ແລະ ກົດບັດມະນຸດຊະທຳ ແລະ ມາດຕະຖານຕໍ່າສຸດໃນການຮັບມືກັບໄພພິບັດທີ່ຖືກດັດແກ່ໃນປີ 2004.

***ຈື່ຈຳ*** ເປົ້າໝາຍສຸດທ້າຍທີ 2.1.1 ຂອງກອງປະຊຸມລະຫວ່າງປະເທດຄັ້ງທີ່ 27 ຂອງສະມາຄົມກາແດງ ແລະ ຊີກວົງເດືອນແດງໃນປີ 1999 ທີ່ຮຽກຮ້ອງໃຫ້ລັດຕ່າງໆ ໄດ້ເຊື່ອມເອົາລະບົບການຮັບມືໄພພິບັດສາກົນເຂົ້າໃນແຜນການກຽມພ້ອມຮັບມືກັບໄພພິບັດແຫ່ງຊາດ ພ້ອມທັງປະກອບເອົາພາລະບົດບາດ ແລະ ໜ້າທີ່ທີ່ຊັດເຈນສຳລັບສະພາກາແດງ ແລະ ວົງເດືອນຊີກແດງເຊິ່ງລວມທັງການເປັນຕົວແທນກ່ຽວກັບນະໂຍບາຍແຫ່ງຊາດ ແລະ ອົງກອນປະສານງານຕ່າງໆທີ່ເໝາະສົມ.

***ຈື່ຈຳ*** ເປົ້າໝາຍສຸດທ້າຍທີ 3.2 ຂອງກອງປະຊຸມລະຫວ່າງປະເທດຄັ້ງທີ 28 ຂອງສະມາຄົມກາແດງ ແລະ ຊີກວົງເດືອນແດງໃນປີ 2003 ແລະ ຄວາມມຸ້ງໝັ້ນທີ່ໄດ້ປັບປຸງການຮັບຮູ້, ຄວາມຊັດເຈນ, ການນຳໃຊ້ ແລະ ການສ້າງກົດໝາຍ, ກົດລະບຽບ ແລະ ຫຼັກການໃຫ້ດີຂຶ້ນໃຫ້ສາມາດນຳໃຊ້ໄດ້ກັບການຮັບມືກັບໄພພິບັດນັ້ນ ຈະຊ່ວຍອຳນວຍຄວາມສະດວກ ແລະ ປັບປຸງການປະສານງານ, ກຳນົດເວລາ, ຄຸນນະພາບ ແລະ ການກວດສອບໄດ້ຂອງບັນດາກິດຈະກຳການຮັບມືກັບໄພພິບັດລະຫວ່າງປະເທດ ແລະ ສາມາດປະກອບສ່ວນຢ່າງໃຫຍ່ຫຼວງໃນການປ້ອງກັນກຽດສັກສີຂອງມະນຸດ ໃນເວລາທີ່ເກີດມີໄພພິບັດ;

***ຮັບຮູ້*** ຜົນຂອງການຄົ້ນຄວ້າຂອງສະຫະພັນສະມາຄົມກາແດງ ແລະ ຊີກວົງເດືອນແດງສາກົນ (ສະຫະພັນສາກົນ), ດັ່ງທີ່ໄດ້ລະບຸໄວ້ໃນເອກະສານຄວາມເປັນມາຕໍ່ກອງປະຊຸມ (30IC/07/9.1), ທີ່ວ່າໂຄງສ້າງກົດໝາຍລະຫວ່າງປະເທດ ແລະ ມາດຕະຖານກ່ຽວກັບການບັນເທົາທຸກ ແລະ ການຟື້ນຟູຈາກໄພພິບັດຍັງກະຈາຍອອກໄປ ແລະ ຖືກນຳໃຊ້ບໍ່ເຕັມເມັດເຕັມໜ່ວຍ, ວ່າມັນມັກຈະບໍ່ມີຄວາມສອດຄ້ອງກັນລະຫວ່າງກົດໝາຍແຫ່ງຊາດກັບມາດຕະຖານສາກົນ ແລະ ວ່າສິ່ງກີດຂວາງທາງດ້ານນິຕິກຳຕໍ່ ການບັນເທົາທຸກໄພພິບັດລະຫວ່າງປະເທດ ແລະ ການຊ່ວຍເຫຼືອຟື້ນຟູຍັງຄົງມີຢູ່.

***ຮັບຮູ້*** ວ່າຄວາມກວ້າງຂວາງ ແລະ ຄວາມຫຼາກຫຼາຍຂອງບັນດາຜູ້ກ່ຽວຂ້ອງສາກົນທີ່ໄດ້ມີສ່ວນຮ່ວມໃນການບັນເທົາທຸກ ແລະ ຟື້ນຟູໄພພິບັດບໍ່ພຽງແຕ່ນຳເອົາໂອກາດທີ່ສຳຄັນເທົ່ານັ້ນ ແຕ່ກໍ່ຍັງນຳເອົາຄວາມທ້າທາຍມາສູ່ບຸກຄົນທີ່ໃຫ້ການຊ່ວຍເຫຼືອທີ່ຕ້ອງການຢ່າງມີປະສິດທິພາບ ແລະ ຮັບປະກັນວ່າລັກສະນະເສີມຕໍ່ກັນ ແລະ ກັນຂອງການບັນເທົາໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູກັບຄວາມພະຍາຍາມ ແລະ ກົນໄກການຮັບມືກັບໄພພິບັດພາຍໃນ.

***ຮັບຮູ້*** ສິດອະທິປະໄຕຂອງລັດທີ່ໄດ້ຮັບຜົນກະທົບເພື່ອຊອກຫາ, ຍອມຮັບ, ປະສານງານ, ຄວບຄຸມ ແລະ ຕິດຕາມການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູທີ່ຜູ້ໃຫ້ການຊ່ວຍເຫຼືອທີ່ໄດ້ຕອບສະໜອງໃຫ້ໃນດິນແດນຂອງຕົນ.

***ພິຈາລະນາ*** ພາລະບົດບາດທີ່ສຳຄັນຂອງກົດໝາຍ ແລະ ນະໂຍບາຍພາຍໃນ ເຊິ່ງຄວນຈະຖືກພັດທະນາຕໍ່ໄປເພື່ອໃຫ້ສອດຄ້ອງກັບມາດຖານ ແລະ ຫຼັກການຂອງກົດໝາຍລະຫວ່າງປະເທດທີ່ກ່ຽວຂ້ອງ;

1. *ນຳໃຊ້* ຄູ່ມືສຳລັບການອຳນວຍຄວາມສະດວກພາຍໃນ ແລະ ກົດລະບຽບການບັນເທົາທຸກ ແລະ ການຊ່ວຍເຫຼືອຟື້ນຟູໃນເບື້ອງຕົ້ນສາກົນ;
2. *ສະໜັບສະໜຸນ* ລັດເພື່ອໝູນໃຊ້ຄູ່ມືໃຫ້ເປັນປະໂຫຍດເພື່ອສ້າງຄວາມເຂັ້ມໃຫ້ແກ່ກົດໝາຍ, ນະໂຍບາຍ ແລະ ໂຄງສ້າງນະໂຍບາຍສະຖາບັນແຫ່ງຊາດ ພ້ອມທັງໃນເວລາທີ່ສ້າງຂໍ້ຕົກລົງການຮ່ວມມືສອງຝ່າຍ ແລະ ການຊ່ວຍເຫຼືອໄພພິບັດຂັ້ນຂົງເຂດຕາມຄວາມເໝາະສົມ ເຊິ່ງຈະຕ້ອງເຂົ້າໃຈວ່າຄູ່ມືນັ້ນບໍ່ມີຂໍ້ຜູກມັດທາງດ້ານນິຕິກຳໃດໆ ທັງໝົດ;
3. *ເນັ້ນໜັກວ່າ,* ໂດຍອີງຕາມກິດຈະກຳການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູຂອງກາແດງ ແລະ ຊີກວົງເດືອນແດງ, ຄູ່ມືນີ້ຈະສອດຄ້ອງກັບກົດລະບຽບ, ຫຼັກການ ແລະ ການປະຕິບັດຂະບວນການເຄື່ອນໄຫວທີ່ໄດ້ສ້າງຂຶ້ນເຊິ່ງລວມທັງຂໍ້ບັງຄັບຂອງຂະບວນການດັ່ງກ່າວທີ່ໄດ້ດັດແກ້ໃນປີ 1995 ແລະ 2006, ຫຼັກການ ແລະ ກົດລະບຽບສຳລັບການບັນເທົາທຸກຂອງສະພາກາແດງ ແລະ ຊີກວົງເດືອນແດງທີ່ໄດ້ດັດແກ້ໃນປີ 1995, ສັນຍາຕົກລົງເຊວີນກ່ຽວກັບການຈັດຕັ້ງກິດຈະກຳສາກົນໃນອົງປະກອບຂອງຂະບວນການເຄື່ອນໄຫວຂອງກາແດງ ແລະ ຊີກວົງເດືອນແດງໃນປີ 1997, ແລະ ມາດຕະການສຳຮອງ ເພື່ອເພີ່ມທະວີການຈັດຕັ້ງປະຕິບັດຂໍ້ຕົກລົງເຊວິນໃນປີ 2005; ແລະ ຈະບໍ່ສົ່ງຜົນກະທົບຕໍ່ຂໍ້ຕົກລົງທາງດ້ານນິຕິກຳອື່ນໆທີ່ມີຢູ່ລະຫວ່າງອົງປະກອບຂອງຂະບວນການ ແລະ ລັດທີ່ກ່ຽວຂ້ອງ;
4. ເຊີນລັດ, ສະຫະພັນລະຫວ່າງປະເທດ ແລະ ສະມາຄົມແຫ່ງຊາດ ເພື່ອນຳສະເໜີຄູ່ມືນີ້ໃຫ້ແກ່ອົງການຈັດລະຫວ່າງ ລັດຖະບານ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານສາກົນ ແລະ ຂົງເຂດທີ່ກ່ຽວຂ້ອງກັບການບັນເທົາທຸກໄພພິບັດ ແລະ ການຊ່ວຍເຫຼືອຟື້ນຟູໄດ້ເຫັນເຖິງຄວາມສຳຄັນຂອງມັນ;
5. ເຊີນສະຫະພັນລະຫວ່າງປະເທດ ແລະ ສາມາຄົມແຫ່ງຊາດ ໂດຍປະສານສົມທົບກັບສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນ ແລະ ປະຈຳຂົງເຂດ ເພື່ອ:
   I. ເຜີຍແຜ່ ແລະ ສະໜັບສະໜຸນການນຳໃຊ້ຄູ່ມືເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ກົດໝາຍ, ນະໂຍບາຍ ແລະ ໂຄງສ້າງນະໂຍບາຍສະຖາບັນເພື່ອຮັບມືກັບໄພພິບັດ;
   II. ສົ່ງເສີມກະແສຄວາມສຳຄັນຂອງຄູ່ມືໃນທຸກໆ ແນວຄວາມຄິດລິເລີ່ມ ໃນການພັດທະນານິຕິກຳ, ການຮັບມືກັບໄພພິບັດ ແລະ ການຫຼຸດຜ່ອນຄວາມສ່ຽງ ໂດຍສະເພາະແມ່ນຍຸດທະສາດ ລະຫວ່າງປະເທດສຳລັບລະບົບການຫຼຸດຜ່ອນໄພພິບັດ ແລະ ນະໂຍບາຍສຳລັບການຫຼຸດຜ່ອນຄວາມໄພພິບັດໃນຂົງເຂດ; ແລະ

III. ສືບຕໍ່ຄວາມພະຍາຍາມຄົ້ນຄວ້າ ແລະ ໂຄສະນາ ແລະ ສ້າງເຄື່ອງມື ແລະ ຮູບແບບເພື່ອປັງປຸງ ຄວາມພ້ອມທາງດ້ານນິຕິກໍາສໍາລັບເຫດການໄພພິບັດ;

6. ເຊີນສະຫະພັນລະຫວ່າງປະເທດ ໂດຍປຶກສາຫາລືກັບສະມາຄົມແຫ່ງຊາດ ເພື່ອສົ່ງບົດລາຍງານຄວາມຄືບໜ້າກ່ຽວກັບການຈັດຕັ້ງປະຕິບັດມະຕິນີ້ຕໍ່ກອງປະຊຸມ ລະຫວ່າງ ປະເທດຂອງກາແດງ ແລະ ຊີກວົງເດືອນແດງຄັ້ງທີ 31;

# ບັນດາຜູ້ໃຫ້ທຶນໃນແຜນງານ IDRL 2008 - 2009 (ເລີ່ມແຕ່ວັນທີ່ 1 ສິງຫາ, 2008)

| ລັດຖະບານ | ສະມາຄົມແຫ່ງຊາດ | ຜູ້ໃຫ້ທຶນອື່ນໆ |
|---|---|---|
| ອົງການອອສເອດ (AusAID) ຈາກລັດຖະບານອົດສະຕຣາລີ | ສາພາກາແດງ ອົດສຕຣາລີ Australia Red Cross | ທະນາຄານພັດທະນາອາຊີ ADB |
| ກົມພັດທະນາລະຫວ່າງປະເທດ DFID | ສາພາກາແດງອັງກິດ British Red Cross | ເຟດເອກສ FedEx |
| ອົງການພັດທະນາລະຫວ່າງປະເທດການາດາ CIDA | ສາພາກາແດງການາດາ Canadian Red Cross | |
| | ສາພາກາແດງຍີ່ປຸ່ນ Japanese Red Cross Society | |
| | ສາພາກາແດງອົດສຕຣາລີ້ Austrian Red Cross | |

# ຫຼັກການພື້ນຖານຂອງຂະບວນການເຄື່ອນໄຫວ
# ກາແດງ ແລະ ຊີກວົງເດືອນແດງສາກົນ

**ມະນຸດຊະທຳ**

ຂະບວນການເຄື່ອນໄຫວກາແດງແລະຊີກວົງເດືອນແດງສາກົນ ທີ່ເກີດຂຶ້ນໂດຍມີຈຸດປະສົງໃຫ້ການຊ່ວຍເຫຼືອທີ່ປາດສະຈາກການຈຳແນກຕໍ່ຜູ້ບາດເຈັບໃນສະໜາມຮົບ ພະຍາຍາມປ້ອງກັນ ແລະ ລົບລ້າງຄວາມທຸກທໍລະມານຂອງມະນຸດໃນເວລາທີ່ພົບເຫັນຕາມຂີດຄວາມສາມາດຂອງຕົນເອງ. ຈຸດປະສົງຂອງຂະບວນການເຄື່ອນໄຫວນີ້ ກໍ່ເພື່ອປົກປ້ອງຊີວິດ ແລະ ສຸຂະພາບ ແລະ ເພື່ອຮັບປະກັນຄວາມເຄົາລົບຕໍ່ການເປັນມະນຸດ. ມັນສົ່ງເສີມຄວາມເຂົ້າໃຈ, ມິດຕະພາບ, ການຮ່ວມມື ແລະ ສັນຕິພາບທີ່ຍາວນານ ເຊິ່ງກັນແລະກັນ.

**ການບໍ່ຝັກຝ່າຍໃດ**

ຂະບວນການນີ້ບໍ່ໄດ້ຈຳແນກສັນຊາດ, ເຊື້ອຊາດ, ຄວາມເຊື່ອຖືທາງສາດສະໜາ, ຊົນຊັ້ນ ຫຼື ຄວາມຄິດເຫັນທາງດ້ານການເມືອງ. ຂະບວນການນີ້ພະຍາຍາມທີ່ຈະບັນເທົາຄວາມທຸກທໍລະມານຂອງບຸກຄົນ ໂດຍອີງໃສ່ຄວາມຕ້ອງການຂອງຕົນຢ່າງດຽວເທົ່ານັ້ນ ແລະ ເພື່ອໃຫ້ບຸລິມະສິດແກ່ເຫດການທີ່ເປັນອັນຕະລາຍກ່ອນ.

**ຄວາມເປັນກາງ**

ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ທຸກຝ່າຍ, ຂະບວນການນີ້ອາດບໍ່ເຂົ້າຂ້າງໃຜໃນເວລາມີການຕໍ່ສູ້ ຫຼື ກ່ຽວຂ້ອງກັບການຜິດຖຽງທາງດ້ານການເມືອງ, ເຊື້ອຊາດ, ສາດສະໜາ ຫຼື ລັດທິໃດໜຶ່ງທຸກໆເວລາ.

**ເອກະລາດ**

ຂະບວນການນີ້ເປັນຂະບວນການເອກະລາດ. ສະມາຄົມແຫ່ງຊາດຈະຕ້ອງຮັກສາອຳນາດໄວ້ເພື່ອທີ່ວ່າຕົນເອງຈະສາມາດປະຕິບັດຕາມຫຼັກການຂອງຂະບວນການດັ່ງກ່າວໄດ້ທຸກເວລາ ໃນຂະນະທີ່ອີງການຈັດຕັ້ງທີ່ໃຫ້ການບໍລິການທາງດ້ານມະນຸດສະທຳຂອງລັດຖະບານຈະຕ້ອງໄດ້ເຄົາລົບຕໍ່ກົດໝາຍຂອງປະເທດທີ່ກ່ຽວຂ້ອງ.

**ອາສາສະມັກໃນການໃຫ້ບໍລິການ**

ມັນເປັນຂະບວນການບັນເທົາທີ່ສະມັກໃຈ ບໍ່ແມ່ນຖືກກະຕຸ້ນຈາກຄວາມຢາກໄດ້

**ເອກະພາບ**

ມັນອາດຈະມີສະພາກາແດງ ແລະ ຊີກວົງເດືອນແດງໃນໜຶ່ງປະເທດເທົ່ານັ້ນ. ມັນຈະຕ້ອງຖືກເປີດໄວ້ສຳລັບທຸກໆຝ່າຍ. ມັນອາດຈະ ດຳເນີນວຽກງານມະນຸດຊະທຳທົ່ວດິນແດນຂອງຕົນ.

**ລັກສະນະທົ່ວໄປ**

ຂະບວນການເຄື່ອນໄຫວກາແດງແລະຊີກວົງເດືອນແດງສາກົນມີທົ່ວທຸກບ່ອນໃນໂລກ ເຊິ່ງແຕ່ລະສະມາຄົມມີຖານະເທົ່າກັນ ແລະ ມີໜ້າທີ່ ຮັບຜິດຊອບຮ່ວມກັນຢ່າງເທົ່າທຽມ ໃນການຊ່ວຍເຫຼືອເຊິ່ງກັນແລະກັນ .

**ພ້ອມພຽງກັນເພື່ອມະນຸດຊະທຳ**

ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນສົ່ງເສີມກິດຈະກຳການຊ່ວຍເຫຼືອດ້ານມະນຸດຊະທຳຂອງສະມາຄົມແຫ່ງຊາດໃນບັນດາປະ ຊາຊົນທີ່ມີຄວາມສ່ຽງ.

ດ້ວຍການປະສານງານການບັນເທົາທຸກໄພພິບັດ ລະຫວ່າງ ປະເທດ ແລະ ດ້ວຍການສະໜັບສະໜູນການຊ່ວຍເຫຼືອການພັດທະນາ, ຂະບວນນີ້ຢາກຈະປ້ອງກັນ ແລະ ຫຼຸດຜ່ອນຄວາມທຸກທໍລະມານຂອງມະນຸດ.

ສະຫະພັນສາກົນ, ສະມາຄົມແຫ່ງຊາດ ແລະ ຄະນະກຳມະການສາກົນຂອງສະພາກາແດງພ້ອມກັນທີ່ຈະເຕົ້າໂຮມຂະບວນການເຄື່ອນໄຫວກາແດງ ແລະ ຊີກວົງເດືອນແດງສາກົນ.